# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2016

ທະນາຄານແຫ່ງປະເທດຈີນ ຈໍາກັດ, ສາຂາ ນະຄອນຫຼວງວຽງຈັນ

**ສາລະບານ**


| | *ໜ້າ* |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 2 - 3 |
| ໃບລາຍງານຜົນການດໍາເນີນງານ | 4 |
| ໃບລາຍງານຜົນການດໍາເນີນງານນອກການທຸລະກິດ | 5 |
| ໃບລາຍງານຖານະການເງິນ | 6 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 7 |
| ໃບລາຍງານກະແສເງິນສົດ | 8 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 9 - 39 |

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ຂໍ້ມູນທົ່ວໄປ

**ສາຂາ**

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານ ແຫ່ງ ສປປລາວ (“ທຫລ”) ລົງວັນທີ 19 ກຸມພາ 2015.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2016, ທຶນຈົດທະບຽນທີ່ຖອກແລ້ວແມ່ນ 405,100,000,000 ກີບ. (31 ທັນວາ 2015 ແມ່ນ 405,100,000,000 ກີບ).

ການເຄື່ອນໄຫວຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

**ຜູ້ຈັດການທົ່ວໄປ ແລະ ຕົວແທນທາງດ້ານກົດໝາຍ**

ຕົວແທນທາງດ້ານກົດໝາຍຂອງສາຂາ ພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ ແມ່ນທ່ານ Li Zhiyong, ຜູ້ຈັດການທົ່ວໄປ.

**ນັກກວດສອບບັນຊີ**

ນັກກວດສອບບັນຊີຂອງສາຂາແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

Building a better
working world

Ernst & Young Lao Company Limited.
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61245636/18967928 -IFRS

## ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ເຈົ້າຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ**

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ ("ສາຂາ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2016, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ລວມທັງສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າເຫັນວ່າ ນອກຈາກຜົນກະທົບທີ່ອາດຈະເກີດຂຶ້ນຈາກບັນຫາທີ່ໄດ້ລະບຸໄວ້ໃນວັກພື້ນຖານການອອກຄຳເຫັນແບບມີເງື່ອນໄຂໃນບົດລາຍງານຂອງພວກຂ້າພະເຈົ້າແລ້ວ, ເອກະສານລາຍງານການເງິນທີ່ໄດ້ຄັດຕິດມານີ້ໄດ້ຖືກນຳສະເໜີຢ່າງຖືກຕ້ອງ, ຖານະການເງິນຂອງສາຂາ ນະວັນທີ 31 ທັນວາ 2016 ແລະ ຜົນການດຳເນີນງານ ແລະ ກະແສເງິນສົດສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວຖືກນຳສະເໜີໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ.

### *ພື້ນຖານການອອກຄຳເຫັນແບບມີເງື່ອນໄຂ*

ເນື່ອງຈາກຂໍ້ຈຳກັດຂອງຂໍ້ມູນ, ທາງຄະນະບໍລິຫານຂອງສາຂາຍັງບໍ່ສາມາດຕອບສະໜອງການເປີດເຜີຍຂໍ້ມູນຂອງມູນຄ່າຍຸຕິທຳ ແລະ ການບໍລິຫານຄວາມສ່ຽງທາງການເງິນ ທີ່ໄດ້ກຳນົດໄວ້ພາຍໃຕ້ມາດຕະຖານສາກົນດ້ານການລາຍງານການເງິນ ເລກທີ 7: "ເຄື່ອງມືທາງການເງິນ: ການເປີນເຜີຍຂໍ້ມູນ" ແລະ IFRS ເລກທີ 13: "ການວັດແທກມູນຄ່າຍຸຕິທຳ".

ພວກຂ້າພະເຈົ້າໄດ້ດຳເນີນການກວດສອດໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ. ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມໃນວັກ "*ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ*" ຕໍ່ໄປນີ້. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກສາຂາ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີ ສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ("ຂໍ້ກຳນົດທາງດ້ານຈັນຍາບັນຂອງລາວ") ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີ ຂອງສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ຂໍ້ກຳນົດທາງດ້ານຈັນຍາບັນຂອງລາວ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

### *ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານຂອງສາຂາແມ່ນມີຄວາມຮັບຜິດຊອບໃນການສ້າງເອກະສານລາຍງານການເງິນ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານເຫັນວ່າ ວ່າມີຄວາມຈຳເປັນໃນການສ້າງເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫລວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການສ້າງເອກະສານລາຍງານການເງິນ, ຄະນະບໍລິຫານ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາກ່ຽວກັບຄວາມສືບເນື່ອງໃນການດຳເນີນທຸລະກິດ, ຖ້າມີ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

EY

Building a better
working world

*ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນຢ່າງສົມເຫດສົມຜົນວ່າ ເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄໍາເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດໍາເນີນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບນັ້ນຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແລະ ສາມາດພິຈາລະນາວ່າ ສໍາຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນໍາໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດໍາເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກໍານົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫລວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດໍາເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄໍາເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຜົນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທໍາຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄໍາເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນໍາໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນໍາໃຊ້ໂດຍຄະນະບໍລິຫານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນໍາໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດໍາເນີນທຸລະກິດ ຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສໍາຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສໍາຄັນກ່ຽວກັບຄວາມອາດສາມາດຂອງສາຂາໃນຄວາມສືບເນື່ອງໃນການດໍາເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສໍາຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄໍາເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດໍາເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສໍາຄັນ ລວມທັງບັນດາຂໍ້ບົກຜ່ອງທີ່ສໍາຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກໍານົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

Ernst & Young Lao Ltd

ບໍລິສັດ ເອີນ ແອນ ຢັງ ລາວ ຈໍາກັດ
ERNST & YOUNG LAO CO.,LTD

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017

## ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016

| | *ບົດ ອະທິບາຍ ເລກທີ* | *2016 ລ້ານກີບ* | *2015 ລ້ານກີບ* |
|---|---|---|---|
| ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ | 7 | 34,160 | 6,553 |
| ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືດອກເບ້ຍ | 8 | (9,339) | (1,505) |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **24,821** | **5,048** |
| ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ | 9 | 1,820 | 180 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 10 | (204) | (57) |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | | **1,616** | **123** |
| ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ | 11 | 926 | 394 |
| **ລາຍຮັບທັງໝົດຈາກການດຳເນີນງານ** | | **27,363** | **5,565** |
| ລາຍຈ່າຍໜີ້ເສຍ | 18 | (243) | (979) |
| **ລາຍຮັບສຸດທິຈາກການດຳເນີນງານ** | | **27,120** | **4,586** |
| ລາຍຈ່າຍເງິນເດືອນ | 12 | (10,240) | (8,405) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 19 | (3,289) | (2,475) |
| ລາຍຈ່າຍອື່ນໆໃນການດຳເນີນງານ | 13 | (8,014) | (9,124) |
| **ລາຍຈ່າຍໃນການດຳເນີນງານທັງໝົດ** | | **(21,543)** | **(20,004)** |
| **ກຳໄລ/(ຂາດທຶນ) ກ່ອນຫັກອາກອນ** | | **5,577** | **(15,418)** |
| ອາກອນກຳໄລ | 24 | - | - |
| **ກຳໄລ/(ຂາດທຶນ) ພາຍໃນປີ** | | **5,577** | **(15,418)** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນການດຳເນີນງານນອກການທຸລະກິດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016

| | *2016* *ລ້ານກີບ* | *2015* *ລ້ານກີບ* |
|---|---|---|
| **ກຳໄລ/(ຂາດທຶນ) ພາຍໃນປີ** | **5,577** | **(15,418)** |
| **ລາຍຮັບອື່ນໆນອກການທຸລະກິດຫຼັງຫັກອາກອນ** | **-** | **-** |
| **ລວມຍອດຜົນໄດ້ຮັບນອກການທຸລະກິດພາຍໃນປີ, (ຫຼັງຫັກອາກອນ)** | **5,577** | **(15,418)** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017

## ທະນາຄານແຫ່ງປະເທດຈີນ ຈໍາກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2016

| | *ບົດ ອະທິບາຍ ເລກທີ* | *31 ທັນວາ 2016 ລ້ານກີບ* | *31 ທັນວາ 2015 ລ້ານກີບ* |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ເງິນຝາກຢູ່ ທະນາຄານ ແຫ່ງ ສປປ ລາວ | 14 | 386,016 | 372,123 |
| ເງິນຝາກຢູ່ທະນາຄານອື່ນ | 15 | 410,637 | 37,777 |
| ຫຼັກຊັບຖືໄວ້ຈົນຄົບກໍານົດ | 16 | 413,747 | 411,325 |
| ເງິນກູ້ໃຫ້ລູກຄ້າ | 17 | 121,520 | 97,180 |
| ຊັບສົມບັດ ແລະ ອຸປະກອນ | 19 | 9,808 | 13,072 |
| ຊັບສິນອື່ນໆ | 20 | 17,619 | 19,669 |
| **ຊັບສິນທັງໝົດ** | | **1,359,347** | **951,146** |
| **ໜີ້ສິນ** | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | 21 | 534,228 | 438,778 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | 22 | 425,574 | 73,130 |
| ໜີ້ສິນອື່ນໆ | 23 | 4,286 | 49,556 |
| **ໜີ້ສິນທັງໝົດ** | | **964,088** | **561,464** |
| **ທຶນ** | | | |
| ທຶນຈົດທະບຽນທີ່ຖອກແລ້ວ | 25 | 405,100 | 405,100 |
| ຂາດທຶນສະສົມ | | (9,841) | (15,418) |
| **ທຶນທັງໝົດ** | | **395,259** | **389,682** |
| **ໜີ້ສິນ ແລະ ທຶນທັງໝົດ** | | **1,359,347** | **951,146** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດໍາເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017

## ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016

| | *ທຶນຈົດທະບຽນທີ່ຖອກແລ້ວ ລ້ານກີບ* | *ຂາດທຶນສະສົມ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|
| **ຍອດເຫຼືອນະວັນທີ 26 ມີນາ 2015** | - | - | - |
| ທຶນຈົດທະບຽນ | 405,100 | - | 405,100 |
| ຂາດທຶນໃນໄລຍະ | - | (15,418) | (15,418) |
| **ຍອດເຫຼືອນະວັນທີ 31 ທັນວາ 2015** | **405,100** | **(15,418)** | **389,682** |
| ກຳໄລສຸດທິພາຍໃນປີ | - | 5,577 | 5,577 |
| **ຍອດເຫຼືອນະວັນທີ 31 ທັນວາ 2016** | **405,100** | **(9,841)** | **395,259** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ
ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017

## ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016

| | *ບົດ ອະທິບາຍ ເລກທີ* | *2016 ລ້ານກີບ* | *2015 ລ້ານກີບ* |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລ/(ຂາດທຶນ) ສຸດທິກ່ອນຫັກອາກອນ** | | **5,577** | **(15,418)** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 19 | 3,289 | 2,475 |
| ລາຍຈ່າຍໜີ້ເສຍ | 18 | 245 | 979 |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນໃນການດຳເນີນງານ | | | |
| ເງິນຝາກຢູ່ທະນາຄານອື່ນ | | 2,221 | (32,365) |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | (24,585) | (98,159) |
| ຊັບສິນອື່ນໆ | | (370) | (430,996) |
| ເພີ່ມຂຶ້ນ/(ຫຼຸດລົງ) ຂອງໜີ້ສິນໃນການດຳເນີນງານ | | | |
| ເງິນຝາກ ແລະ ເງິນກູ້ຢືມຈາກທະນາຄານອື່ນ | | 95,450 | 438,778 |
| ເງິນຝາກລູກຄ້າ ແລະ ໜີ້ຕ້ອງສົ່ງໃຫ້ລູກຄ້າອື່ນໆ | | 352,444 | 73,130 |
| ໜີ້ສິນອື່ນໆ | | (45,270) | 49,556 |
| **ກະແສເງິນສົດສຸດທິຈາກ/(ໃຊ້ເຂົ້າ) ໃນກິດຈະກຳການດຳເນີນງານ** | | **389,001** | **(12,020)** |
| **ການເຄື່ອນໄຫວດ້ານການລົງທຶນ** | | | |
| ການຊື້ຊັບສົມບັດ ແລະ ອຸປະກອນ | | (25) | (15,547) |
| **ກະແສເງິນສົດສຸດທິທີ່ໃຊ້ເຂົ້າໃນການເຄື່ອນໄຫວດ້ານການລົງທຶນ** | | **(25)** | **(15,547)** |
| **ການເຄື່ອນໄຫວດ້ານການເງິນ** | | | |
| ການປະກອບທຶນ | | - | 405,100 |
| **ກະແສເງິນສົດສຸດທິຈາກການເຄື່ອນໄຫວດ້ານການເງິນ** | | **-** | **405,100** |
| **ເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **388,976** | **377,533** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ/ໄລຍະ** | | **377,533** | **-** |
| **ຜົນກະທົບຈາກສ່ວນຜິດດ່ຽງການແລກປ່ຽນເງິນຕາ** | | **-** | **-** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ/ໄລຍະ** | **26** | **766,509** | **377,533** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017

## 1. ຂໍ້ມູນກ່ຽວກັບສາຂາ

*ການສ້າງຕັ້ງ ແລະ ການເຄື່ອນໄຫວ*

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາດາເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານ ແຫ່ງ ສປປລາວ ("ທຫລ") ລົງວັນທີ 19 ກຸມພາ 2015.

ການເຄື່ອນໄຫວຕົ້ນຕໍຂອງສາຂາ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

*ທຶນຈົດທະບຽນ*

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2016, ທຶນຈົດທະບຽນທີ່ຖອກແລ້ວແມ່ນ 405,100,000,000 ກີບ (31 ທັນວາ 2015: 405,100,000,000ກີບ).

*ຜູ້ຈັດການທົ່ວໄປ*

ຜູ້ຈັດການທົ່ວໄປຂອງສາຂາ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2016 ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນທ່ານ Li Zhiyong.

*ທີ່ຕັ້ງ*

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ພະນັກງານທັງໝົດຂອງສາຂານະວັນທີ 31 ທັນວາ 2016 ມີ 27 ຄົນ (31 ທັນວາ 2015: 20).

## 2. ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ແມ່ນໄດ້ຖືກກະກຽມ ບົນພື້ນຖານມູນຄ່າຕົ້ນທຶນເດີມ, ຍົກເວັ້ນທີ່ໄດ້ລະບຸໄວ້ໃນບົດອະທິບາຍຊ້ອນທ້າຍອື່ນໆ.

ສາຂາດຳເນີນການບັນທຶກບັນຊີ ເປັນສະກຸນເງິນ ກີບ ແລະ ນຳສະເໜີເອກະສານລາຍງານການເງິນເປັນຫົວໜ່ວຍລ້ານກີບ.

ປີການບັນຊີທຳອິດຂອງສາຂາແມ່ນເລີ່ມຈາກວັນທີ 26 ມີນາ 2015 ເຖິງວັນທີ 31 ທັນວາ 2015. ປີການບັນຊີຂອງປີຕໍ່ມາແມ່ນເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ.

## 3. ບົດຖະແຫຼງການໃນການປະຕິບັດ

ເອກະສານລາຍງານການເງິນຂອງສາຂາຖືກສ້າງຂຶ້ນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ ("IFRS") ທີ່ອອກໂດຍ IASB.

## 4. ການນຳສະເໜີເອກະສານລາຍງານການເງິນ

ສາຂາໄດ້ນຳສະເໜີໃບລາຍງານຖານະການເງິນຂອງຕົນເພື່ອສະແດງສະພາບຄ່ອງ. ຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນແມ່ນຖືກສະແດງໃນມູນຄ່າລວມໃນໃບລາຍງານຖານະການເງິນ. ເຊິ່ງຈະຖືກນຳມາຫັກລ້າງກັນ ແລະ ລາຍງານຕາມມູນຄ່າສຸດທິກໍ່ຕໍ່ເມື່ອ ມີຂໍ້ກຳນົດອະນຸຍາດທາງກົດໝາຍໃດໜຶ່ງໃຫ້ຫັກລ້າງມູນຄ່າທີ່ຖືກຮັບຮູ້ໂດຍປາສະຈາກເຫດການທີ່ອາດຈະເກີດຂຶ້ນໃນອະນາຄົດ, ເມື່ອບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງຫາກມີຄວາມຕ້ອງການຢາກຫັກລ້າງ ໃນທຸກໆກໍລະນີຂ້າງລຸ່ມນີ້:

- ຕາມສະພາບການປົກກະຕິຂອງທຸລະກິດ
- ໃນກໍລະນີທີ່ທຸລະກິດມີການກະທຳຄວາມຜິດ
- ໃນກໍລະນີຂອງການລົ້ມລະລາຍ ຫຼື ການລົ້ມລະລາຍຂອງສາຂາ ແລະ/ຫຼື ຄູ່ຄ້າຂອງຕົນ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### 5.1 *ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ*

ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນໄດ້ບັນທຶກໂດຍນຳໃຊ້ອັດຕາແລກປ່ຽນທັນທີນະມື້ທີ່ເຮັດທຸລະກຳ. ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ເປັນເງິນຕາຕ່າງປະເທດແມ່ນໄດ້ຖືກຕີມູນຄ່າເປັນເງິນກີບໃນທ້າຍປີ ຕາມອັດຕາແລກປ່ຽນໃນມື້ເຮັດບົດລາຍງານ (ລາຍລະອຽດອັດຕາແລກປ່ຽນຂອງເງິນຕາຕ່າງປະເທດທຽບໃສ່ເງິນກີບນະວັນທີ 31 ທັນວາ 2016 ໄດ້ສະແດງເພີ່ມເຕີມໃນບົດອະທິບາຍເລກທີ 33). ສ່ວນຜິດດ່ຽງຈາກອັດຕາແລກປ່ຽນທີ່ເກີດຈາກການຕີມູນຄ່າບັນດາຊັບສິນ ແລະ ໜີ້ສິນການເງິນໃນມື້ສ້າງບົດລາຍງານການເງິນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

### 5.2 *ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ*

#### 5.2.1 *ວັນທີຂອງການຮັບຮູ້*

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແລະ ໜີ້ຕ້ອງສົ່ງລູກຄ້າ, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້ - ຂາຍ ເຊັ່ນ ມື້ທີ່ສາຂາກາຍເປັນພາກສ່ວນໜຶ່ງໃນພັນທະສັນຍາຂອງເຄື່ອງມືທາງການເງິນ. ນີ້ລວມທັງ "ວິທີການຄ້າປົກກະຕິ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ຮຽກຮ້ອງໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໂດຍກົດໝາຍ ຫຼື ລະບຽບການເງິນໃນສະຖານທີ່ຊື້ຂາຍ. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ໃນເມື່ອເງິນໄດ້ໂອນເຂົ້າບັນຊີຂອງລູກຄ້າຮຽບຮ້ອຍແລ້ວ. ສາຂາຮັບຮູ້ໜີ້ຕ້ອງສົ່ງລູກຄ້າເມື່ອສາຂາໄດ້ຮັບເງິນຈາກລູກຄ້າເປັນທີ່ຮຽບຮ້ອຍແລ້ວ.

#### 5.2.2 *ການຕີມູນຄ່າເບື້ອງຕົ້ນຂອງເຄື່ອງມືທາງການເງິນ*

ການຈັດປະເພດເຄື່ອງມືທາງການເງິນຕາມການຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບລັກສະນະຂອງເຄື່ອງມືທາງການເງິນ ແລະ ຈຸດປະສົງຂອງຄະນະບໍລິຫານຕໍ່ເຄື່ອງມືທາງການເງິນທີ່ຕ້ອງການ. ເຄື່ອງມືທາງການເງິນທັງໝົດແມ່ນຖືກຕີມູນຄ່າໃນເບື້ອງຕົ້ນຕາມມູນຄ່າຍຸດຕິທຳບວກກັບລາຍຈ່າຍທີ່ເກີດຈາກການຊື້, ຍົກເວັ້ນໃນກໍລະນີຂອງຊັບສິນ ແລະ ໜີ້ສິນທາງການເງິນທີ່ມູນຄ່າຍຸດຕິທຳຖືກບັນທຶກໂດຍຜ່ານກຳໄລ ແລະ ຂາດທຶນ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

*5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

*5.2.3 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ອັດຕາດອກເບ້ຍທີ່ແທ້ຈິງ (EIR) ແມ່ນອັດຕາສ່ວນຫຼຸດຕົວຈິງທີ່ໄດ້ຈາກການຄາດຄະເນການຊໍາລະເງິນສົດໃນອະນາຄົດ ຫຼື ລາຍຮັບຕາມອາຍຸການທີ່ໄດ້ຄາດຄະເນຂອງເຄື່ອງມືການເງິນ ຫຼື ໄລຍະສັ້ນກວ່າທີ່ຍອມຮັບໄດ້ຂອງຍອດຍົກມາສຸດທິຂອງຊັບສິນ ຫຼື ໜີ້ສິນທາງການເງິນ. ຄ່າເສື່ອມຕົ້ນທຶນຂອງຊັບສິນ ຫຼື ໜີ້ສິນທາງການເງິນແມ່ນຖືກດັດແກ້ ເມື່ອສາຂາໄດ້ແກ້ໄຂການຄາດຄະເນລາຍຈ່າຍ ຫຼື ລາຍຮັບຂອງສາຂາ. ການດັດແກ້ຄ່າເສື່ອມຕົ້ນທຶນຖືກຄິດໄລ່ໂດຍນໍາໃຊ້ອັດຕາດອກເບ້ຍຕົວຈິງ ແລະ ສ່ວນຜິດດ່ຽງຂອງມູນຄ່າດັ່ງກ່າວຈະຖືກບັນທຶກເປັນ 'ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ' ສໍາລັບຊັບສິນທາງການເງິນ ແລະ 'ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືດອກເບ້ຍ' ສໍາລັບໜີ້ສິນທາງການເງິນ. ນະໂຍບາຍການບັນຊີສໍາລັບວິທີ EIR ແມ່ນມີຄວາມແຕກຕ່າງຕາມແຕ່ລະປະເພດຂອງການນໍາໃຊ້ເຄື່ອງມື ເຊິ່ງໄດ້ອະທິບາຍເພີ່ມເຕີມໃນບົດອະທິບາຍຊ້ອນທ້າຍເລກທີ:

- 5.2.5 ສໍາລັບ 'ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ'
- 5.2.6 ສໍາລັບ 'ຫຼັກຊັບຖືໄວ້ຈົນຄົບກໍານົດ'
- 5.2.7 ສໍາລັບ 'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ການກູ້ຢືມອື່ນໆ'
- 5.4 ສໍາລັບ 'ການເຊື່ອມມູນຄ່າຂອງຊັບສິນທາງການເງິນ'
- 5.5 ສໍາລັບ 'ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ'

*5.2.4 'ມື້ທີ 1' ກໍາໄລ ຫຼື ຂາດທຶນ*

ເມື່ອລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸດຕິທໍາຂອງລາຄາຕາມທ້ອງຕະຫຼາດໃນປັດຈຸບັນ ຂອງເຄື່ອງມືການເງິນອັນດຽວກັນ ຫຼື ອີງຕາມມູນຄ່າທີ່ໄດ້ສໍາຫຼວດໃນຕະຫຼາດ, ສາຂາຮັບຮູ້ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທໍາ ('ມື້ທີ 1' ກໍາໄລ ຫຼື ຂາດທຶນ) ໃນ "ລາຍຮັບສຸດທິຈາກການຄ້າ". ໃນກໍລະນີທີ່ມູນຄ່າຍຸດຕິທໍາຖືກໍານົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສໍາຫຼວດ, ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າທີ່ໄດ້ຈາກນໍາໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານກໍ່ຕໍ່ເມື່ອຂໍ້ມູນສາມາດຊອກຫາໄດ້ ຫຼື ເມື່ອເຄື່ອງມືການເງິນບໍ່ຖືກຮັບຮູ້.

*5.2.5 ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ*

'ໜີ້ຕ້ອງຮັບຈາກທະນາຄານອື່ນ' ແລະ 'ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ' , ລວມມີຊັບສິນການເງິນທີ່ບໍ່ແມ່ນອະນຸພັນທີ່ມີໄລຍະເວລາ ຫຼື ສາມາດກໍານົດໄລຍະເວລາການຊໍາລະທີ່ແນ່ນອນ ເຊິ່ງລາຄາຊັບສິນເຫຼົ່ານັ້ນບໍ່ໄດ້ມີການຊື້ - ຂາຍໃນຕະຫຼາດ, ນອກເໜືອຈາກ:

- ສາຂາມີຄວາມຕັ້ງໃຈທີ່ຈະຂາຍທັນທີ ຫຼື ສາຂາສາມາດຂາຍໄດ້ໃນໄລຍະສັ້ນ ແລະ ນັ້ນກໍ່ຂຶ້ນຢູ່ກັບການຮັບຮູ້ເບື້ອງຕົ້ນ, ກໍານົດຕາມມູນຄ່າຍຸດຕິທໍາຜ່ານກໍາໄລ ຫຼື ຂາດທຶນ;
- ສາຂາຮັບຮູ້ມູນຄ່າເບື້ອງຕົ້ນ ແລະ ກໍານົດມູນຄ່າຂາຍ;
- ສາຂາອາດຈະບໍ່ໄດ້ກໍາໄລຈາກການລົງທຶນທັງໝົດ ເນື່ອງຈາກການເສື່ອມຄ່າຂອງຊັບສິນ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

*5.2.5 ໜີ້ຕ້ອງຮັບຈາກທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ* (ຕໍ່)

ຫຼັງຈາກການປະເມີນເບື້ອງຕົ້ນ, ເງິນຝາກກັບທະນາຄານອື່ນ ແລະ ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ ຈະຖືກບັນທຶກລົງບັນຊີ ນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງ (ອັດຕາດອກເບ້ຍທີ່ແທ້ຈິງ "EIR") ລົບໃຫ້ລາຍຈ່າຍຄ່າເສື່ອມ. ຄ່າເສື່ອມຖືກຄິດໄລ່ໂດຍ ຄຳນຶງເຖິງສ່ວນຫຼຸດຂອງຊັບສິນທີ່ໄດ້ມາ ແລະ ຄ່າທຳນຽມ ແລະ ຕົ້ນທຶນທີ່ເປັນສ່ວນໜຶ່ງຂອງອັດຕາດອກເບ້ຍຕົວຈິງ. ເພາະສະນັ້ນ, ສາຂາໄດ້ຮັບຮູ້ລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາຜົນຕອບແທນເຊິ່ງເປັນອັດຕາການຄາດຄະເນທີ່ດີທີ່ສຸດ ຂອງອັດຕາຜົນຕອບແທນຄົງທີ່ຕາມອາຍຸເງິນກູ້, ດັ່ງນັ້ນ, ຈຶ່ງມີການຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ແຕກຕ່າງກັນໃນ ການຄິດໄລ່ຄ່າທຳນຽມໃນໄລຍະຕ່າງໆ ແລະ ລັກສະນະອື່ນໆຂອງວົງຈອນຊີວິດຜະລິດຕະພັນ (ການຈ່າຍລ່ວງໜ້າ, ດອກເບ້ຍ ປັບໄໝ ແລະ ຄ່າບໍລິການ).

ຖ້າຫາກວ່າການຄາດຄະເນມີການປັບປຸງແກ້ໄຂ, ຈະຕ້ອງມີການບັນທຶກການດັດແກ້ເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງມູນຄ່າໃນໃບລາຍ ງານຖານະການເງິນ ອີງຕາມການເພີ່ມຂຶ້ນ ຫຼື ຫຼຸດລົງຂອງລາຍຮັບດອກເບ້ຍ. ຫຼັງຈາກນັ້ນ, ມູນຄ່າດັດແກ້ດັ່ງກ່າວຈະຖືກຄິດໄລ່ ຄ່າເສື່ອມ ແລະ ຖືກບັນທຶກເປັນລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍໃນໃບລາຍງານຜົນການດຳເນີນງານ.

ສາຂາອາດຈະອອກຂໍ້ຜູກພັນເງິນກູ້ເມື່ອເງິນກູ້ຖືກຖອນ, ເງິນກູ້ດັ່ງກ່າວນັ້ນຈະຖືກຈັດປະເພດເປັນການເຄື່ອນໄຫວທີ່ມີ ໄວ້ ເພື່ອຄ້າຂາຍເພາະວ່າຈຸດປະສົງແມ່ນຂາຍເງິນກູ້ໄລຍະສັ້ນ. ຂໍ້ຜູກພັນເຫລົ່ານີ້ຈະຖືກບັນທຶກ ແລະ ຖືກປະເມີນຕາມມູນຄ່າ ຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນ.

ເມື່ອເງິນກູ້ຖືກຖອນ, ກໍ່ຈະຖືກຮັກສາໂດຍສາຂາ ແລະ ຈະບໍ່ຂາຍໃນໄລຍະສັ້ນ, ຂໍ້ຜູກພັນຈະຖືກບັນທຶກເມື່ອສັນຍາໄດ້ຖືກ ເຮັດຂຶ້ນ ແລະ ມີແນວໂນ້ມບົ່ງບອກວ່າການຂາດທຶນຈະເພີ່ມຂຶ້ນ (ຕົວຢ່າງ ໜີ້ຕ້ອງສົ່ງໃຫ້ຄູ່ສັນຍາ).

*5.2.6 ຫຼັກຊັບຖືໄວ້ຈົນຄົບກຳນົດ*

ຫຼັກຊັບຖືໄວ້ຈົນຄົບກຳນົດແມ່ນບໍ່ແມ່ນອະນຸພັນທາງການເງິນ ທີ່ຄົງທີ່ ຫຼື ການຊຳລະຄືນສາມາດກຳນົດໄດ້ ແລະ ມີມື້ຄົບກຳ ນົດທີ່ແນ່ນອນ ເຊິ່ງສາຂາມີຈຸດປະສົງ ຫຼື ສາມາດຖືໄວ້ຈົນຄົບກຳນົດ. ຫຼັງຈາກການປະເມີນໃນເບື້ອງຕົ້ນ, ຫຼັກຊັບຖືໄວ້ຈົນຄົບ ກຳນົດຈະຖືກປະເມີນໃນໄລຍະຕໍ່ມາຕາມຄ່າເສື່ອມໂດຍນຳໃຊ້ອັດຕາດອກເບ້ຍແທ້ຈິງ ລົບໃຫ້ຄ່າເສື່ອມ. ຕົ້ນທຶນຄ່າເສື່ອມຖືກ ຄິດໄລ່ໂດຍການນຳເອົາສ່ວນຫຼຸດ ຫຼື ຄ່າບໍລິການເພີ່ມເຕີມໃນຕອນຊື້ ແລະ ຄ່າທຳນຽມ ທີ່ເປັນພາກສ່ວນສຳຄັນຂອງອັດຕາ ດອກເບ້ຍແທ້ຈິງ. ການເສື່ອມຖືກລວມໃນລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍໃນໃບລາຍງານຜົນການດຳເນີນງານ. ການ ຂາດທຶນທີ່ເກີດຈາກການເສື່ອມຄ່າຂອງການລົງທຶນດັ່ງກ່າວຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານໃນລາຍຈ່າຍ ຂາດທຶນໜີ້ເສຍ.

*5.2.7 ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ການກູ້ຢືມອື່ນໆ*

"ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ການກູ້ຢືມອື່ນໆ" ປະກອບມີຂໍ້ຕົກລົງຕາມສັນຍາທີ່ສົ່ງຜົນເຮັດໃຫ້ສາຂາມີ ພັນທະທີ່ຕ້ອງຈ່າຍເງິນສົດ ຫຼື ຊັບສິນການເງິນອື່ນໆໃຫ້ແກ່ເຈົ້າຂອງສັນຍາ.

ຫຼັງຈາກມີການປະເມີນເບື້ອງຕົ້ນ, 'ເງິນກູ້ຢືມຈາກທະນາຄານອື່ນ ແລະ ລູກຄ້າ ແລະ ການກູ້ຢືມອື່ນໆ' ຈະຖືກປະເມີນອີງ ຕາມການຫັກມູນຄ່າເສື່ອມໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ ('EIR'). ມູນຄ່າເສື່ອມຖືກຄິດໄລ່ໂດຍອີງຕາມສ່ວນຫລຸດ ແລະ ຄ່າທຳນຽມຂອງໜີ້ ແລະ ຕົ້ນທຶນທີ່ເປັນສ່ວນໜຶ່ງຂອງການຄິດໄລ່ອັດຕາດອກເບ້ຍຕົວຈິງ.

## 5. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *5.2 ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ ແລະ ການຕີມູນຄ່າຕາມພາຍຫຼັງ* (ຕໍ່)

#### *5.2.8 ການຈັດປະເພດຊັບສິນການເງິນຄືນໃໝ່*

ເລີ່ມຈາກວັນທີ 1 ກໍລະກົດ 2008, ສາຂາໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ສຳລັບບັນດາຊັບສິນທາງການເງິນ ທີ່ບໍ່ແມ່ນອອກຈາກ "ຊັບສິນທີ່ມີໄວ້ເພື່ອການຄ້າ" ໄປເປັນ "ຊັບສິນທີ່ມີໄວ້ເພື່ອຂາຍ", "ເງິນກູ້ ແລະ ໜີ້ຕ້ອງຮັບ", ຫຼື "ຊັບສິນທີ່ຖືໄວ້ຈົນຄົບກຳນົດ". ນັບຈາກວັນທີດັ່ງກ່າວ, ສາຂາຍັງໄດ້ຮັບອະນຸຍາດໃຫ້ຈັດປະເພດຄືນໃໝ່ ບັນດາເຄື່ອງມືການເງິນທີ່ນອກເໜືອຈາກ "ເຄື່ອງມືການເງິນທີ່ມີໄວ້ເພື່ອຂາຍ" ໄປເປັນ "ເງິນກູ້ ແລະ ໜີ້ຕ້ອງຮັບ" . ການຈັດປະເພດຄືນໃໝ່ຈະຖືກບັນທຶກດ້ວຍມູນຄ່າຍຸດຕິທຳໃນມື້ທີ່ຕີມູນຄ່າຄືນ, ເຊິ່ງມູນຄ່າດັ່ງກ່າວນັ້ນຈະກາຍເປັນມູນຄ່າຕົ້ນທຶນໃໝ່.

ສຳລັບຊັບສິນການເງິນທີ່ຖືກຈັດເປັນປະເພດອອກຈາກ "ຊັບສິນມີໄວ້ເພື່ອຂາຍ" , ທຸກໆກຳໄລ ແລະ ຂາດທຶນທີ່ເກີດຈາກຊັບສິນດັ່ງກ່າວໃນໄລຍະຜ່ານມາທີ່ໄດ້ລົງບັນຊີເປັນທຶນຕົນເອງແມ່ນຖືກສະສາງໄປເປັນກຳໄລ ຫຼື ຂາດທຶນຈາກອາຍຸສັນຍາທີ່ຍັງເຫຼືອຂອງການລົງທຶນໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ. ທຸກໆສ່ວນຜິດດ່ຽງລະຫວ່າງມູນຄ່າຕົ້ນທຶນໃໝ່ ແລະ ກະແສເງິນ ສົດທີ່ຄາດຄະເນໄວ້ແມ່ນຈະຖືກສະສາງອອກຕາມອາຍຸສັນຍາທີ່ຍັງເຫຼືອຂອງຊັບສິນໂດຍໃຊ້ອັດຕາດອກເບ້ຍຕົວຈິງ. ຖ້າຊັບສິນຖືກກຳນົດວ່າມີການເສື່ອມຄ່າມູນຄ່າທີ່ລົງບັນຊີເປັນທຶນຕົນເອງນັ້ນຈະຖືກນຳມາລາຍງານໃນໃບລາຍງານຜົນການດຳເນີນງານ.

ໃນບາງກໍລະນີ ສາຂາອາດຈະຈັດປະເພດຊັບສິນການຄ້າທີ່ບໍ່ແມ່ນອານຸພັນອອກຈາກ "ຊັບສິນທີ່ມີໄວ້ເພື່ອການຄ້າ" ເປັນປະເພດ "ເງິນກູ້ ແລະ ໜີ້ຕ້ອງຮັບ" ຖ້າການເຄື່ອນໄຫວຂອງມັນສອດຄ່ອງກັບຄວາມໝາຍຂອງເງິນກູ້ ແລະ ໜີ້ຕ້ອງຮັບ ແລະ ສາຂາມີເຈດຈຳນົງໃດໜຶ່ງ ແລະ ສາມາດຄອບຄອງຊັບສິນທາງການເງິນສຳລັບອະນາຄົດທີ່ສາມາດຮູ້ລ່ວງໜ້າ ຫຼື ຄອບຄອງໄວ້ຈົນຄົບກຳນົດ. ຖ້າຊັບສິນການເງິນຖືກຈັດປະເພດຄືນໃໝ່, ແລະ ຖ້າສາຂາໄດ້ຄາດຄະເນເງິນສົດທີ່ຈະໄດ້ຮັບໃນອະນາຄົດເພີ່ມໃນພາຍຫຼັງເນື່ອງຈາກວ່າຄວາມສາມາດທີ່ຈະໄດ້ຮັບເງິນສົດດັ່ງກ່າວເພີ່ມຂຶ້ນ, ຜົນກະທົບຂອງການເພີ່ມຂຶ້ນນັ້ນ ແມ່ນໄດ້ບັນທຶກເປັນການດັດແກ້ ຕາມອັດຕາດອກເບ້ຍຕົວຈິງ ຈາກມື້ທີ່ການຄາດຄະເນມີການປ່ຽນແປງ.

ການຈັດປະເພດຄືນໃໝ່ແມ່ນການເລືອກໂດຍຄະນະອຳນວຍການ ແລະ ຖືກກຳນົດເປັນເຄື່ອງມືໂດຍພື້ນຖານເຄື່ອງມື.

### *5.3 ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ*

#### *5.3.1 ຊັບສິນທາງການເງິນ*

ຊັບສິນທາງການເງິນ (ຫຼື, ສ່ວນໜຶ່ງຂອງຊັບສິນການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດຮັບຮູ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນໄດ້ໝົດອາຍຸແລ້ວ. ນອກຈາກນີ້, ສາຂາຍັງຢຸດຮັບຮູ້ເປັນຊັບສິນ ໃນກໍລະນີທີ່ຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.

ສາຂາຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ສາຂາໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ

ຫຼື

- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຈ່າຍກະແສເງິນສົດທີ່ຈະໄດ້ຮັບທັງໝົດໃນອານາຄົດໂດຍທັນທີໃຫ້ພາກສ່ວນທີສາມພາຍໃຕ້ຮູບແບບ 'ການຕິດພັນ'

ການຕິດພັນ ເປັນການເຮັດທຸລະກຳຜ່ານສາຂາຖືເປັນລາຍການທີ່ເກີດຂຶ້ນ ເມື່ອສາຂາຖືສິດຕາມສັນຍາ ເພື່ອຮັບກະແສເງິນສົດຂອງຊັບສິນທາງການເງິນ (ຊັບສິນເດີມ), ແຕ່ຖືເປັນພາລະຜູກພັນຕາມສັນຍາທີ່ຈະຕ້ອງຈ່າຍຊຳລະເງິນສົດໃຫ້ແກ່ກິດຈະການຢ່າງໜ້ອຍໜຶ່ງແຫ່ງ (ຜູ້ຮັບສຸດທ້າຍ), ເມື່ອມີການປະຕິບັດຕາມເງື່ອນໄຂທັງສາມຂໍ້ດັ່ງຕໍ່ໄປນີ້. ນະວັນທີ 31 ທັນວາ 2016 ສາຂາບໍ່ມີຊັບສິນທາງການເງິນພາຍໃຕ້ຮູບແບບດັ່ງກ່າວ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 5.3 *ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ* (ຕໍ່)

#### 5.3.1 *ຊັບສິນທາງການເງິນ* (ຕໍ່)

ການໂອນຈະສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້ ກໍຕໍ່ເມື່ອ:

- ສາຂາໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນດັ່ງກ່າວ

ຫຼື

- ສາຂາບໍ່ໄດ້ໂອນຄວາມສ່ຽງ ແລະ ຮັກສາຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນ ທັງໝົດ, ແຕ່ໄດ້ໂອນການຄວບຄຸມຊັບສິນດັ່ງກ່າວແລ້ວ.

ສາຂາຈະພິຈາລະນາວ່າ ການຄວບຄຸມຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈໍາກັດໃດໆກ່ຽວກັບການໂອນ.

ເມື່ອສາຂາໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼື ໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ສາຂາຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ສາຂາຍັງຮັບຮູ້ເປັນໜີ້ສິນໃນເຄືອ, ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ວ່າມັນຈະສົ່ງຜົນກະທົບຕໍ່ສິດ ແລະ ພັນທະຂອງສາຂາທີ່ມີຢູ່.

ການສືບຕໍ່ຂອງຮູບແບບຂອງການຄໍ້າປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕໍ່າກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ສາຂາມີຄວາມສາມາດໃນການຊໍາລະໜີ້.

ນອກຈາກນີ້ສາຂາຍັງຢຸດຮັບຮູ້ບັນດາຊັບສິນທາງການເງິນໂດຍສະເພາະການໃຫ້ກູ້ຢືມແກ່ລູກຄ້າ ເມື່ອເງື່ອນໄຂ ແລະ ຂໍ້ຕົກລົງສ່ວນໃຫຍ່ໄດ້ມີການເຈລະຈາກັນໃໝ່ ແລະ ຖືກພິຈາລະນາເປັນກູ້ຢືມໃໝ່, ສ່ວນຜິດດ່ຽງຈະຖືກບັນທຶກເປັນຄ່າເສື່ອມໃນໃບລາຍງານຜົນການດໍາເນີນງານ.

#### 5.3.2 *ໜີ້ສິນທາງການເງິນ*

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີເມື່ອພັນທະຕໍ່ກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່, ແລະ ສ່ວນຜິດດ່ຽງຂອງຍອດຍົກມາຈະຖືກລາຍງານໃນໃບລາຍງານຜົນການດໍາເນີນງານ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *5.4 ການເສື່ອມມູນຄ່າຂອງຊັບສິນທາງການເງິນ*

ສາຂາປະເມີນໃນມື້ເຮັດໃບລາຍງານຖານະການເງິນວ່າມີຫຼັກຖານຊັດເຈນທີ່ສະແດງໃຫ້ເຫັນວ່າ ຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນມີການເສື່ອມມູນຄ່າ ຫຼື ບໍ່. ຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນການເງິນຈະຖືວ່າມີຄວາມເສຍ ຫາຍຖ້າພຽງແຕ່ວ່າມີ ຫຼັກຖານຊັດເຈນຂອງຄວາມເສຍຫາຍຈາກຜົນຂອງໜຶ່ງ ຫຼື ຫຼາຍເຫດການທີ່ປະກົດຂຶ້ນຫຼັງຈາກ ມີການຮັບຮູ້ຊັບສິນ (ເກີດມີ "ເຫດການເສຍຫາຍ") ແລະ ເຫດການເສຍຫາຍໜຶ່ງ (ຫຼື ຫຼາຍເຫດການ) ໄດ້ສົ່ງຜົນກະທົບເຖິງການຄາດຄະເນກະແສເງິນສົດໃນອະນາຄົດຂອງຊັບສິນການເງິນ ຫຼື ກຸ່ມຂອງຊັບສິນການເງິນທີ່ສາມາດຄາດຄະເນໄດ້ຢ່າງໜ້າເຊື່ອຖື.

ຫຼັກຖານຂອງການເສື່ອມມູນຄ່າອາດລວມມີ: ຕົວຊີ້ວັດວ່າຜູ້ກູ້ຢືມ ຫຼື ກຸ່ມຂອງຜູ້ກູ້ຢືມມີຄວາມຫຍຸ້ງຍາກທາງດ້ານ ການເງິນ, ການຜິດສັນຍາ ຫຼື ບໍ່ສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ, ມີຄວາມເປັນໄປໄດ້ວ່າພວກເຂົາຈະລົ້ມລະລາຍ ຫຼື ການປັບປຸງລະບົບການເງິນຄືນໃໝ່ ແລະ ຂໍ້ມູນອື່ນໆທີ່ສະແດງໃຫ້ເຫັນວ່າກະແສເງິນສົດທີ່ຖືກປະເມີນໃນອະນາຄົດຈະຫລຸດລົງ ເຊັ່ນ: ການປ່ຽນແປງໜີ້ເກີນກຳນົດ ຫຼື ເງື່ອນໄຂດ້ານເສດຖະກິດທີ່ກ່ຽວຂ້ອງກັບການຜິດສັນຍາ.

#### *5.4.1 ຊັບສິນທາງການເງິນຕາມມູນຄ່າສຸດທິຫຼັງຫັກຄ່າເສື່ອມມູນຄ່າ*

*ການເສື່ອມມູນຄ່າສະເພາະ*

ສຳລັບຊັບສິນທາງການເງິນທີ່ບັນທຶກຕາມມູນຄ່າສຸດທິຫຼັງຫັກຄ່າເສື່ອມມູນຄ່າ (ເຊັ່ນ: ເງິນກູ້ຢືມຈາກສາຂາອື່ນ ແລະ ລູກຄ້າ ແລະ ການກູ້ຢືມອື່ນໆ), ສາຂາຈະປະເມີນຫຼັກຖານຂອງການເສື່ອມມູນຄ່າຂອງຊັບສິນທາງການເງິນວ່າມີຫຼັກຖານການເສື່ອມຄ່າຂອງຊັບສິນການເງິນນັ້ນສຳຄັນ ຫຼື ບໍ່ເພື່ອພິຈາລະນາສະເພາະໂດຍຜູ້ບໍລິຫານ.

ຖ້າຫາກມີຫຼັກຖານວ່າຄ່າເສື່ອມເກີດຂຶ້ນ, ຈຳນວນຄ່າເສື່ອມຈະຖືກຕີມູນຄ່າເປັນສ່ວນຕ່າງລະຫວ່າງຍອດຍົກມາຂອງຊັບສິນ ແລະ ຍອດເຫຼືອປັດຈຸບັນຂອງກະແສເງິນສົດໃນອະນາຄົດ (ບໍ່ລວມເອົາຄ່າເສື່ອມທີ່ອາດຈະເກີດຂຶ້ນໃນອະນາຄົດ). ຍອດຍົກມາຂອງຊັບສິນແມ່ນຫລຸດລົງ ຍ້ອນນຳໃຊ້ບັນຊີຄ່າເສື່ອມ ແລະ ຈຳນວນຄ່າເສື່ອມທີ່ລາຍງານໃນໃບລາຍງານຜົນການດຳເນີນງານ. ລາຍ ຮັບດອກເບ້ຍຈະຖືກສືບຕໍ່ຄິດໄລ່ຕາມຍອດຍົກມາທີ່ຫລຸດລົງ ແລະ ຖືກຄິດໄລ່ໂດຍນຳໃຊ້ອັດຕາດອກເບ້ຍກະແສເງິນສົດໃນອະນາຄົດ ເພື່ອປະເມີນຄ່າເສື່ອມ. ລາຍຮັບດອກເບ້ຍຖືກລົງບັນຊີໃນ "ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ".

ເງິນກູ້ພ້ອມກັບລາຍຈ່າຍທີ່ຕິດພັນຈະຖືກສະສາງອອກ ເມື່ອສາຂາໄດ້ພິຈາລະນາວ່າຈະບໍ່ສາມາດເກັບໜີ້ໄດ້ ແລະ ເມື່ອ ຫຼັກຊັບຄ້ຳ ປະກັນຖືກໂອນໃຫ້ສາຂາ. ຖ້າໃນປີຕໍ່ມາ, ຄ່າເສື່ອມໜີ້ເສຍຈະເພີ່ມຂຶ້ນ ຫຼື ຫລຸດລົງຍ້ອນວ່າມີເຫດການ ເກີດຂຶ້ນຫຼັງຈາກໄດ້ຫັກຄ່າເສື່ອມ, ຄ່າເສື່ອມໜີ້ເສຍທີ່ຖືກຫັກໄວ້ກ່ອນໜ້ານີ້ຈະເພີ່ມຂຶ້ນ ຫຼື ຫລຸດລົງໂດຍການດັດແກ້ໃນບັນຊີລາຍຈ່າຍ, ຖ້າໃນອະນາຄົດຈະສາມາດເກັບຄືນໄດ້ ມູນຄ່າທີ່ເກັບຄືນໄດ້ນັ້ນຈະຖືກລົງບັນຊີເບື້ອງມີໃນ "ລາຍຈ່າຍຂາດທຶນສິນເຊື່ອ".

ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດທີ່ຄາດຄະເນໄວ້ ແມ່ນມູນຄ່າໃນປັດຈຸບັນຕາມອັດຕາດອກເບ້ຍຕົວຈິງຂອງຊັບສິນການເງິນ. ຖ້າເງິນກູ້ມີອັດຕາດອກເບ້ຍທີ່ຜັນແປ, ອັດຕາສ່ວນຫລຸດສຳລັບການຕີມູນຄ່າຂອງຄ່າເສື່ອມມູນຄ່າແມ່ນອັດຕາດອກເບ້ຍຕົວຈິງໃນປັດຈຸບັນ. ຖ້າສາຂາໄດ້ຈັດປະເພດຊັບສິນການຄ້າເປັນເງິນກູ້ ແລະ ເງິນລ່ວງໜ້າ, ອັດຕາສ່ວນ ຫລຸດສຳລັບຄິດໄລ່ຄ່າເສື່ອມແມ່ນ ຕ້ອງນຳໃຊ້ອັດຕາດອກເບ້ຍຕົວຈິງໃນປັດຈຸບັນ.

ການຄິດໄລ່ມູນຄ່າປັດຈຸບັນຂອງກະແສເງິນສົດໃນອະນາຄົດ ທີ່ຄາດຄະເນໄວ້ຂອງຫຼັກຊັບຄ້ຳປະກັນ ມີຜົນກະທົບຕໍ່ກະແສເງິນສົດ ເຊິ່ງອາດເປັນຜົນມາຈາກຫຼັກຊັບຄ້ຳປະກັນທີ່ຍຶດມາໄດ້ລົບໃຫ້ຕົ້ນທຶນຂອງຫຼັກຊັບຄ້ຳປະກັນທີ່ໄດ້ຮັບ ແລະ ຂາຍ ບໍ່ວ່າການຍຶດຫຼັກຊັບຈະເປັນໄປໄດ້ ຫຼື ບໍ່ກໍ່ຕາມ.

## 5. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### 5.4 *ການເສື່ອມມູນຄ່າຂອງຊັບສິນທາງການເງິນ* (ຕໍ່)

#### 5.4.1 *ຊັບສິນທາງການເງິນຕາມມູນຄ່າສຸດທິຫຼັງຫັກຄ່າເສື່ອມມູນຄ່າ* (ຕໍ່)

*ຮູບແບບການເສື່ອມມູນຄ່າເປັນກຸ່ມ*

ເພື່ອຈຸດປະສົງໃນການປະເມີນຄ່າເສື່ອມເປັນກຸ່ມ, ຊັບສິນການເງິນແມ່ນຖືກຈັດເປັນກຸ່ມຕາມລັກສະນະຄວາມສ່ຽງທີ່ຄ້າຍຄືກັນ ເຊິ່ງເປັນຕົວຊີ້ວັດຄວາມສາມາດຂອງລູກໜີ້ໃນການຈ່າຍເງິນຈຳນວນທັງໝົດອັນເນື່ອງມາສັນຍາ (ຕົວຢ່າງເຊັ່ນ, ອີງຕາມພື້ນຖານຂອງການປະເມີນຜົນຄວາມສ່ຽງການປ່ອຍສິນເຊື່ອ ຫຼື ການໃຫ້ຄະແນນໂດຍພິຈາລະນາຈາກປະເພດຊັບສິນ, ປະເພດອຸດສາຫະກຳ, ສະຖານທີ່ຕັ້ງພູມສາດ, ປະເພດຂອງຫຼັກຊັບຄ້ຳປະກັນ, ສະຖານະພາບທີ່ຜ່ານມາ ແລະ ປັດໄຈອື່ນໆທີ່ກ່ຽວຂ້ອງ).

ກະແສເງິນສົດໃນອານາຄົດຂອງກຸ່ມຊັບສິນການເງິນທີ່ມີການຫັກຄ່າເສື່ອມມູນຄ່າເປັນກຸ່ມ ແມ່ນຖືກຄາດຄະເນບົນພື້ນຖານການເສື່ອມຄ່າຜ່ານມາຂອງຊັບສິນທີ່ມີລັກສະນະຄວາມສ່ຽງສິນເຊື່ອທີ່ຄ້າຍຄືກັນໃນກຸ່ມ. ການເສື່ອມຄ່າຜ່ານມາຖືກດັດແກ້ບົນພື້ນຖານຂໍ້ມູນທີ່ມີໃນປັດຈຸບັນ ເພື່ອສ່ອງແສງເຖິງຜົນກະທົບຂອງເງື່ອນໄຂໃນປັດຈຸບັນ ເຊິ່ງການເສື່ອມຄ່າຜ່ານມາແມ່ນ ເປັນບ່ອນອີງ ແລະ ເພື່ອຍ້າຍຜົນກະທົບຂອງເງື່ອນໄຂໃນໄລຍະຜ່ານມາ ທີ່ບໍ່ສົ່ງຜົນກະທົບໃນປັດຈຸບັນ.

ການຄາດຄະເນການປ່ຽນແປງທີ່ສ່ອງແສງເຖິງກະແສເງິນສົດໃນອະນາຄົດ ແລະ ເປັນໄປໃນທາງດຽວກັນກັບການປ່ຽນແປງຂອງຂໍ້ມູນທີ່ສັງເກດໄດ້ຈາກປີຕໍ່ປີ (ເຊັ່ນການປ່ຽນແປງອັດຕາການວ່າງງານ, ລາຄາຊັບສິນ, ລາຄາສິນຄ້າ, ເງື່ອນໄຂການຊຳລະ, ຫຼື ປັດໄຈອື່ນໆທີ່ບົ່ງບອກເຖິງການຂາດທຶນໃນກຸ່ມ ແລະ ຄວາມສຳຄັນຂອງການຂາດທຶນ). ວິທີການ ແລະ ຂໍ້ສົມມຸດຖານທີ່ນຳໃຊ້ໃນການຄາດຄະເນກະແສເງິນສົດໃນອະນາຄົດ ໄດ້ທົບທວນຄືນຢ່າງເປັນປົກກະຕິ ເພື່ອຫລຸດສ່ວນຜິດດ່ຽງລະຫວ່າງຂາດທຶນທີ່ຄາດຄະເນ ແລະ ຂາດທຶນຕົວຈິງ.

#### 5.4.2 *ການປະເມີນມູນຄ່າຫຼັກຊັບຄ້ຳປະກັນ*

ສາຂາຊອກຫາວິທີທີ່ຈະນຳໃຊ້ຫຼັກຊັບຄ້ຳປະກັນ, ຖ້າເປັນໄປໄດ້, ເພື່ອຫລຸດຜ່ອນຄວາມສ່ຽງຂອງຊັບສິນການເງິນ. ຫຼັກຊັບຄ້ຳປະກັນອາດເປັນໄດ້ຫຼາຍຮູບແບບ ເຊັ່ນ ເງິນສົດ, ຫຼັກຊັບ, ໜັງສືສິນເຊື່ອ/ໜັງສືຄ້ຳປະກັນ, ອະສັງຫາລິມະຊັບ, ໜີ້ຕ້ອງຮັບ, ເຄື່ອງໃນສາງ, ຊັບສິນທີ່ບໍ່ແມ່ນການເງິນອື່ນໆ ແລະ ການຍົກລະດັບສິນເຊື່ອ ເຊັ່ນ ຂໍ້ຕົກລົງທີ່ຮັດກຸມ. ໂດຍທົ່ວໄປ, ມູນຄ່າຍຸດຕິທຳຂອງ ຫຼັກຊັບຄ້ຳປະກັນແມ່ນຖືກປະເມີນໃນມູນຄ່າຕ່ຳສຸດໃນມື້ເລີ່ມຕົ້ນ ແລະ ຕາມບົດລາຍງານປະຈຳປີຂອງສາຂາ.

ເພື່ອກຳນົດຂອບເຂດທີ່ຄວນເປັນໄປໄດ້ ສາຂາໄດ້ນຳໃຊ້ຂໍ້ມູນຕາມທ້ອງຕະຫຼາດສຳລັບປະເມີນຊັບສິນການເງິນ ທີ່ໃຊ້ເປັນຫຼັກຊັບຄ້ຳປະກັນ. ຊັບສິນການເງິນອື່ນໆທີ່ຍັງບໍ່ສາມາດກຳນົດມູນຄ່າຕາມທ້ອງຕະຫຼາດ ຈະຖືກປະເມີນໂດຍໃຊ້ຮູບແບບການປະເມີນ. ຫຼັກຊັບຄ້ຳປະ ກັນທີ່ບໍ່ແມ່ນທາງການເງິນ, ເຊັ່ນ ອະສັງຫາລິມະຊັບຈະຖືກປະ ເມີນຕາມຂໍ້ມູນທີ່ໄດ້ຈາກພາກສ່ວນພາຍນອກ ເຊັ່ນ ນາຍໜ້າ, ດັດສະນີ ລາຄາທີ່ພັກອາໄສ, ບົດລາຍງານການເງິນທີ່ຖືກກວດສອບແລ້ວ ແລະ ແຫລ່ງຂໍ້ ມູນທີ່ໜ້າເຊື່ອຖືອື່ນໆ.

#### 5.4.3 *ຫຼັກຊັບຄ້ຳປະກັນທີ່ຖືກຍຶດ*

ນະໂຍບາຍສາຂາແມ່ນກຳນົດວ່າ ຊັບສິນທີ່ຍຶດມາສາມາດນຳໃຊ້ເຂົ້າໃນການດຳເນີນກິດຈະການພາຍໃນຂອງສາຂາ ຫຼື ຄວນຈະຂາຍ. ຊັບສິນທີ່ເປັນປະໂຫຍດສຳລັບການດຳເນີນງານພາຍໃນຈະຖືກໂອນເຂົ້າໄປເປັນຊັບສິນຕາມແຕ່ລະປະເພດທີ່ກ່ຽວຂ້ອງເຊິ່ງຈະຖືກຕີມູນຄ່າຫຼຸດລົງຈາກມູນຄ່າທີ່ຍຶດມາ ຫຼື ຍອດຍົກມາຂອງຊັບສິນທີ່ຖືກຄ້ຳປະກັນ. ຊັບສິນທີ່ຖືກກຳນົດວ່າຈະຂາຍອອກຈະຖືກໂອນເປັນຊັບສິນມີໄວ້ສຳລັບຂາຍ ແລະ ຖືກຕີມູນຄ່າຕາມມູນຄ່າຕົວຈິງນະມື້ທີ່ຍຶດຊັບສິນໂດຍສອດຄ່ອງກັບນະໂຍບາຍຂອງສາຂາ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 5.5 *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ*

ລາຍຮັບແມ່ນໄດ້ຖືກຮັບຮູ້ໃນຂອບເຂດຂອງຄວາມເປັນໄປໄດ້ທີ່ວ່າ ຜົນປະໂຫຍດໃນທາງເສດຖະກິດຈະໄຫຼເຂົ້າສາຂາ ແລະ ລາຍຮັບເຫຼົ່ານັ້ນຈະຖືກຕີມູນຄ່າຢ່າງເຊື່ອຖືໄດ້. ຫຼັກການການຮັບຮູ້ສະເພາະດັ່ງຕໍ່ໄປນີ້ຈະຕ້ອງຖືກປະເມີນກ່ອນລາຍຮັບຈະຖືກຮັບຮູ້.

### 5.5.1 *ດອກເບ້ຍ ແລະ ລາຍຮັບຄ້າຍຄືດອກເບ້ຍ ແລະ ລາຍຈ່າຍ*

ສຳລັບທຸກໆເຄື່ອງມືທາງການເງິນທີ່ຖືກຕີມູນຄ່າຕາມລາຄາຄ່າເສື່ອມຕົ້ນທຶນ ແລະ ຊັບສິນທາງການເງິນທີ່ມີດອກເບ້ຍ ໄດ້ຈັດປະເພດເປັນຊັບສິນທີ່ມີໄວ້ເພື່ອຂາຍ ແລະ ເຄື່ອງມືທາງການເງິນໄດ້ກຳນົດຕາມມູນຄ່າຍຸດຕິທຳ ໂດຍຜ່ານກຳໄລ ແລະ ຂາດທຶນ , ລາຍຮັບ ຫຼື ລາຍຈ່າຍດອກເບ້ຍ ແມ່ນຖືກບັນທຶກໂດຍນຳໃຊ້ອັດຕາດອກເບ້ຍຕົວຈິງ. ການຄິດໄລ່ແມ່ນຄຳນຶງເຖິງທຸກໆຂໍ້ກຳນົດໃນສັນຍາຂອງເຄື່ອງມືການເງິນ (ເຊັ່ນວ່າ: ທາງເລືອກໃນການ ຊຳລະລ່ວງໜ້າ) ລວມທັງທຸກໆຄ່າທຳນຽມ ຫຼື ລາຍຈ່າຍບໍລິຫານທີ່ກ່ຽວພັນກັບເຄື່ອງມື ແລະ ເຊິ່ງເປັນສ່ວນປະກອບຂອງອັດຕາດອກເບ້ຍທີ່ແທ້ຈິງ, ແຕ່ບໍ່ແມ່ນຂາດທຶນສິນເຊື່ອໃນອານາຄົດ.

ເມື່ອມູນຄ່າຕາມບັນຊີຂອງຊັບສິນທາງການເງິນ ຫຼື ກຸ່ມຂອງຊັບສິນທາງການເງິນທີ່ຄ້າຍຄືກັນຖືກຫຼຸດລົງໂດຍການຫັກຄ່າເສື່ອມມູນຄ່າ, ລາຍຮັບດອກເບ້ຍຈະຖືກຮັບຮູ້ໂດຍການນຳໃຊ້ອັດຕາດອກເບ້ຍທີ່ໃຊ້ໃນການຄິດໄລ່ກະແສເງິນສົດໃນອະນາຄົດເພື່ອຈຸດປະສົງຂອງການວັດຄ່າເສື່ອມ.

### 5.5.2 *ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ*

ສາຂາມີລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ ຈາກການໃຫ້ບໍລິການຫຼາຍຮູບແບບແກ່ລູກຄ້າ. ລາຍຮັບຈາກຄ່າ ທຳນຽມ ສາມາດແບ່ງເປັນສອງປະເພດ ຄືດັ່ງລຸ່ມນີ້:

*ລາຍຮັບຄ່າທຳນຽມຈາກການບໍລິການໃນໄລຍະເວລາໃດໜຶ່ງທີ່ແນ່ນອນ*

ຄ່າທຳນຽມທີ່ໄດ້ຈາກການບໍລິການໃນໄລຍະເວລາໃດໜຶ່ງ ແມ່ນເປັນລາຍຮັບຄ້າງຮັບສຳລັບໃນເວລານັ້ນໆ. ຄ່າທຳນຽມດັ່ງກ່າວລວມມີຄ່າບໍລິການ ແລະ ຄ່າຄຸ້ມຄອງຊັບສິນ, ຄ່າຮັກສາ ແລະ ຄ່າຄຸ້ມຄອງອື່ນໆ ແລະ ຄ່າໃຫ້ຄຳແນະນຳ.

*ລາຍຮັບຄ່າທຳນຽມທີ່ເປັນສ່ວນໜຶ່ງຂອງເຄື່ອງມືທາງການເງິນທີ່ກ່ຽວຂ້ອງ*

ຄ່າທຳນຽມທີ່ສາຂາພິຈາລະນາວ່າເປັນສ່ວນໜຶ່ງຂອງການນຳໃຊ້ເຄື່ອງມືທາງການເງິນທີ່ສອດຄ້ອງກັນໄດ້ແກ່: ຄ່າທຳນຽມການກູ້ຢືມເງິນໃນເບື້ອງຕົ້ນ, ຄ່າທຳນຽມສັນຍາການກູ້ຢືມເງິນສຳລັບເງິນກູ້ຢືມທີ່ມີແນວໂນ້ມທີ່ຈະໄດ້ຮັບການເບີກຖອນ ແລະ ຄ່າທຳນຽມສິນເຊື່ອອື່ນໆທີ່ກ່ຽວຂ້ອງ. ການຮັບຮູ້ຂອງຄ່າທຳນຽມເຫຼົ່ານີ້ (ລວມມີລາຍຈ່າຍບໍລິຫານ) ເປັນສ່ວນຫນຶ່ງຂອງການນຳໃຊ້ເຄື່ອງມືທາງການເງິນທີ່ສອດຄ້ອງກັນ ແລະ ຖືກຮັບຮູ້ເປັນລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາ EIR (ທີ່ກຳນົດໄວ້ໃນຂໍ້ 5.2.3 ຂ້າງເທິງ). ໃນກໍລະນີທີ່ບໍ່ສາມາດເບີກໃຊ້ວົງເງິນກູ້ໄດ້ທັງໝົດ, ຄ່າທຳນຽມສັນຍາຈະຖືກຮັບຮູ້ເປັນລາຍຮັບໄດ້ເມື່ອໝົດອາຍຸພັນທະຜູກພັນທາງການເງິນ. ຄ່າທຳນຽມສັນຍາທີ່ຢູ່ພາຍໃນຂອບເຂດຂອງ IAS 39 (ເຊິ່ງກຳນົດເປັນເປັນ FVPL ຫຼື ຄິດອັດຕາດອກເບ້ຍໃນຕະຫຼາດທີ່ເປັນອັດຕາດອກເບ້ຍຕໍ່າກວ່າ ຫຼື ມີການຊຳລະຕາມບັນຊີສຸດທິ) ຖືກຮັບຮູ້ເປັນອະນຸພັນຕາມມູນຄ່າຍຸຕິທຳໂດຍຜ່ານການກຳໄລ ຫຼື ຂາດທຶນ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

*5.6 ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດດັ່ງທີ່ໄດ້ອ້າງອີງຢູ່ໃນໃບລາຍງານກະແສເງິນສົດປະກອບດ້ວຍເງິນສົດໃນຄັງ, ເງິນຝາກກະແສລາຍວັນກັບທະນາຄານແຫ່ງ ສປປ ລາວ ແລະ ໜີ້ຕ້ອງຮັບຈາກທະນາຄານ ເຊິ່ງເປັນປະເພດກະແສລາຍວັນ, ກຳນົດ 3 ເດືອນ ຫຼື ຕໍ່າກວ່ານັ້ນ.

*5.7 ຊັບສິນບັດ ແລະ ອຸປະກອນ*

ຊັບສິນບັດ ແລະ ອຸປະກອນ (ລວມມີ ອຸປະກອນພາຍໃຕ້ການເຊົ່າໃນການທຸລະກິດທີ່ສາຂາໄດ້ເຊົ່າ) ແມ່ນໄດ້ລາຍງານ ຕາມຕົ້ນທຶນຂອງການບໍລິການມື້ຕໍ່ມື້ ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງ ຂອງອາຍຸການນຳໃຊ້ ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າເສື່ອມຕາມຄວາມເໝາະສົມ ແລະ ເຮັດໃຫ້ມີ ການປ່ຽນແປງຕາມການຄາດຄະເນທາງການບັນຊີ.

ຄ່າຫຼູ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼູ້ຍຫ້ຽນແບບສະເໝີຕົວ ເພື່ອຫຼຸດຕົ້ນທຶນຂອງຊັບສິນບັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ. ອາຍຸການນຳໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງ ລຸ່ມນີ້:

| | |
|---|---|
| ອາຄານ ແລະ ການປັບປຸງອາຄານ | 5% |
| ເຟີນີເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ອຸປະກອນ ຄອມພິວເຕີ | 20% |
| ພາຫະນະ | 20% |

ຊັບສິນບັດ ແລະ ອຸປະກອນຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດຈາກການນຳໃຊ້ຊັບສິນບັດ ແລະ ອຸປະກອນດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສິນບັດ (ຄິດ ໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສິນບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບຈາກການດຳເນີນງານອື່ນໆ" ໃນໃບລາຍງານຜົນການດຳເນີນງານຂອງປີທີ່ຊັບສິນບັດໄດ້ຖືກສະສາງອອກ.

*5.8 ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ*

ສາຂາປະເມີນນະມື້ເຮັດເອກະສານລາຍງານວ່າ ມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດສາຂາປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກມູນຄ່າທີ່ສູງກວ່າລະຫວ່າງມູນຄ່າຍຸດຕິທຳຂອງຊັບສິນ ຫຼື ມູນຄ່າຍຸດຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາຂອງຊັບສິນ ຫຼື ມູນຄ່າຂອງ CGU ຫຼາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເຊື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫລຸດລົງ ເພື່ອໃຫ້ໄດ້ມູນຄ່າປັດຈຸບັນໂດຍການນຳໃຊ້ອັດຕາສ່ວນຫລຸດກ່ອນອາກອນ ທີ່ສົ່ງຜົນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປັດຈຸບັນຂອງເງິນ ແລະຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸດຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍເອົາຜົນຄູນຂອງການຕີມູນຄ່າ, ລາຄາຮຸ້ນທີ່ກຳນົດສຳລັບການຄ້າຂາຍກັບບໍລິສັດໃນເຄືອ ຫຼື ຕົວຊີ້ບອກມູນຄ່າຍຸດຕິທຳອື່ນໆ.

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງບົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫລຸດລົງ. ຖ້າຫາກມີຕົວຊີ້ບອກ, ສາຂາຈະຄາດຄະເນ ຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນມີການປ່ຽນແປງ ໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປີ້ນຄືນແມ່ນຖືກກຳນົດຂຶ້ນ. ສະນັ້ນ, ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດ ຍົກມາທີ່ຖືກກຳນົດ ລົບໃຫ້ຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າ ເສື່ອມຂອງຊັບສິນໃນປີຜ່ານມາ. ການປີ້ນຄືນແມ່ນຖືກຮັບຮູ້ໃນໃບລາຍ ງານຜົນໄດ້ຮັບ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)**

*5.9 ການຄໍ້າປະກັນທາງການເງິນ*

ໂດຍທົ່ວໄປ ສາຂາໄດ້ໃຫ້ການຄໍ້າປະກັນທາງການເງິນ, ປະກອບມີ ໜັງສືສິນເຊື່ອ, ໜັງສືຄໍ້າປະກັນ ແລະ ໜັງສືຕອບຮັບ. ການຄໍ້າປະກັນທາງການເງິນແມ່ນຖືກຮັບຮູ້ໃນເອກະສານລາຍງານການເງິນ (ພາຍໃຕ້ 'ໜີ້ສິນອື່ນໆ') ທີ່ມູນຄ່າຍຸດຕິທໍາ, ພ້ອມຄ່າທໍານຽມ. ພາຍຫຼັງການຮັບຮູ້ໜີ້ສິນຂອງສາຂາພາຍໃຕ້ໜັງສືຄໍ້າປະກັນແມ່ນຄິດໄລ່ໂດຍເອົາມູນຄ່າທີ່ຮັບຮູ້ພື້ນຖານທີ່ສູງກວ່າ ລົບຄ່າເສື່ອມສະສົມທີ່ຮັບຮູ້ໃນໃບລາຍງານການເງິນ ແລະ ການຄາດຄະເນລາຍຈ່າຍທີ່ດີທີ່ສຸດທີ່ຕ້ອງຊໍາລະຕາມພັນທະທີ່ເກີດຂຶ້ນຈາກໜັງສືຄໍ້າປະກັນ.

ທຸກໆການເພີ່ມຂຶ້ນຂອງໜີ້ສິນທີ່ກ່ຽວຂ້ອງກັບການຄໍ້າປະກັນທາງການເງິນແມ່ນ ຖືກບັນທຶກໄວ້ໃນໃບລາຍງານຜົນການດໍາເນີນງານໃນ 'ລາຍຈ່າຍເງິນແຮໜີ້ເສຍ'. ຄ່າທໍານຽມແມ່ນຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານໃນ 'ລາຍຮັບສຸດທິຈາກຄ່າທໍານຽມ ແລະ ຄ່າບໍລິການ' ຕາມວິທີສະເໝີຕົວຕາມອາຍຸຂອງການຄໍ້າປະກັນ.

*5.10 ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຫຼັງອອກການ*

ຜົນປະໂຫຍດຫຼັງອອກການຈະຖືກຈ່າຍໃຫ້ພະນັກງານສາຂາຜູ້ທີ່ບໍານານ ໂດຍພະແນກກອງທຶນສະຫວັດດີການສັງຄົມເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກໍານົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫຼັງອອກການຂອງພະນັກງານ ໂດຍການຈ່າຍເງິນເຂົ້າປະກັນສັງຄົມໃນອັດຕາ 6% ຂອງເງິນເດືອນພື້ນຖານຂອງພະນັກງານ ທຸກໆເດືອນ. ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບພະນັກງານຫຼັງອອກການ.

*ຜົນປະໂຫຍດຈາກການຢຸດຈ້າງງານ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ສາຂາມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊໍານິຊໍານານ ຫຼື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີສາຂາ ພິຈາລະນາວ່າຈໍາເປັນຕ້ອງຫລຸດພະນັກງານ ເພື່ອປັບປຸງອີງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ.

ສໍາລັບຜົນປະໂຫຍດຂອງພະນັກງານທີ່ເກີດຈາກສອງກໍລະນີທີ່ໄດ້ກ່າວມາຂ້າງເທິງນັ້ນ, ສາຂາ ຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານ ໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກໄລ່ອອກໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2016, ບໍ່ມີພະນັກງານສາຂາຖືກໄລ່ອອກຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນຂອງສາຂາ.

*5.11 ເງິນແຮ*

ເງິນແຮຈະຖືກຮັບຮູ້ກໍ່ຕໍ່ເມື່ອສາຂາມີພັນທະ (ທາງດ້ານກົດໝາຍ ຫຼື ຕາມການຕົກລົງ) ເນື່ອງມາຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊໍາລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ສາຂາກໍານົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນການພາສີ ເຊິ່ງແມ່ນອັດຕາການປັດຈຸບັນທີ່ກໍານົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນການດໍາເນີນງານ ພາຍຫຼັງໄດ້ຮັບເງິນຄືນ.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *5.12 ອາກອນກຳໄລ*

*ອາກອນພາຍໃນປີ*

ຊັບສິນ ແລະ ໜີ້ສິນອາກອນພາຍໃນປີ ສຳລັບປີປັດຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະເກັບ ຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນມີຜົນສັກສິດນຳໃຊ້ໃນມື້ເຮັດບົດລາຍງານ ພາຍໃນປະເທດທີ່ສາຂາດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງເສຍອາກອນ.

ອາກອນລາຍໄດ້ພາຍໃນປີທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີຂອງຜູ້ຖືຮຸ້ນ ແລະ ບໍ່ໄດ້ມີການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຜູ້ບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍອີງຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

*ອາກອນເຍື້ອນຊຳລະ*

ອາກອນເຍື້ອນຊຳລະແມ່ນຖືກຄິດໄລ່ຈາກສ່ວນຜິດດ່ຽງຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະແມ່ນຖືກຮັບຮູ້ເປັນສ່ວນຕ່າງອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນອາກອນເຍື້ອນຊຳລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນການເຄື່ອນໄຫວທີ່ບໍ່ແມ່ນການ ສັງລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຕ້ອງເສຍອາກອນ.

ຍອດຍົກມາຂອງໜີ້ຕ້ອງຮັບທາງອາກອນ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫລຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງໜີ້ຕ້ອງຮັບອາກອນຈະຖືກອະນຸຍາດໃຫ້ຫັກ. ໜີ້ຕ້ອງຮັບອາກອນທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ໜີ້ຕ້ອງຮັບອາກອນ ສາມາດຫັກອອກໄດ້.

ໜີ້ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ພາຍໃນປີ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ສ້າງບົດລາຍງານ.

ອາກອນພາຍໃນປີ ແລະ ອາກອນເຍື້ອນຊຳລະຈະຖືກຮັບຮູ້ຜົນປະໂຫຍດທາງອາກອນ ຫຼື ລາຍຈ່າຍໃນໃບລາຍງານຜົນການດຳເນີນງານ, ຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸດຕິທຳຂອງຊັບສິນທີ່ມີໄວ້ສຳລັບການຂາຍ, ການຜິດດ່ຽງອັດຕາແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ເຊິ່ງສາມາດຄິດຄ່າທຳນຽມ ຫຼື ບັນທຶກບັນຊີເປັນ OCI. ຂໍ້ຍົກເວັ້ນເຫຼົ່ານີ້ແມ່ນໄດ້ຖືກຈັດປະເພດຄືນໃໝ່ ຈາກ OCI ໄປ ໃບລາຍງານຜົນການດຳເນີນງານ ໃນບັນຊີກຳໄລ ຫຼື ຂາດທຶນເຍື້ອນຊຳລະ. ສາຂາຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການຊຳລະສະສາງ ທີ່ກ່ຽວຂ້ອງກັບເຄື່ອງມືທາງດ້ານການເງິນ ທີ່ຖືກຈັດປະເພດເປັນທຶນຕົນເອງ.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນເຍື້ອນຊຳລະແມ່ນໄດ້ຖືກຫັກລ້າງ ຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ເພື່ອຫັກລ້າງຊັບສິນອາກອນ ແລະ ໜີ້ສິນອາກອນ ແລະ ສາຂາມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

**5. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ** (ຕໍ່)

*5.13 ມາດຕະຖານທີ່ໄດ້ອອກແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້*

ມາດຕະຖານ ແລະ ການຕີຄວາມໝາຍທີ່ໄດ້ວາງອອກ, ແຕ່ວ່າຍັງບໍ່ທັນມີຜົນບັງຄັບໃຊ້, ຈົນເຖິງມື້ອອກບົດລາຍງານການເງິນຂອງສາຂາ ແມ່ນໄດ້ເປີດເຜີຍດັ່ງຕໍ່ໄປນີ້. ສາຂາຈະຮັບຮອງເອົາມາດຕະຖານເຫລົ່ານີ້, ຖ້າສາມາດນໍາໃຊ້ໄດ້ໃນເວລາທີ່ມາດຕະຖານດັ່ງກ່າວໄດ້ມີຜົນບັງຄັບໃຊ້.

*IFRS 9 ເຄື່ອງມືທາງການເງິນ*

ເດືອນມີນາ 2014, IASB ໄດ້ອອກ IFRS 9 ເຄື່ອງມືທາງການເງິນສະບັບສົມບູນ ທີ່ສະແດງໃຫ້ເຫັນທຸກໆສ່ວນຂອງເຄື່ອງມືທາງການເງິນ ແລະ ປ່ຽນແທນ IAS 39 ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການວັດແທກ ແລະ IFRS 9 ທຸກສະບັບກ່ອນໜ້ານີ້. ມາດຕະຖານດັ່ງກ່າວໄດ້ນໍາສະເໜີຂໍ້ກໍານົດໃໝ່ກ່ຽວກັບ ການຈັດປະເພດ ແລະ ການວັດແທກ, ຄ່າເສື່ອມ, ແລະການບັນຊີປ້ອງກັນຄວາມສ່ຽງ. IFRS 9 ແມ່ນຈະຖືກບັງຄັບໃຊ້ສໍາລັບປີທີ່ເລີ່ມນະວັນທີ ຫຼື ຫຼັງຈາກວັນທີ 1 ມັງກອນ 2018 ພ້ອມກັບອະນຸຍາດໃຫ້ສາມາດນໍາໃຊ້ກ່ອນໄດ້. ມີຂໍ້ກໍານົດໃຊ້ຄືນຫຼັງ ແຕ່ຂໍ້ມູນສົມທຽບແມ່ນບໍ່ໄດ້ບັງຄັບ. ການນໍາໃຊ້ IFRS 9 ຈະມີຜົນບັງຄັບໃຊ້ກ່ຽວກັບການຈັດປະເພດ ແລະ ການວັດແທກຊັບສິນທາງການເງິນຂອງສາຂາ ແຕ່ບໍ່ມີຜົນຕໍ່ກັບການຈັດປະເພດ ແລະ ການວັດແທກໜີ້ສິນທາງການເງິນຂອງສາຂາ.

*IFRS 15 ລາຍຮັບຈາກສັນຍາກັບລູກຄ້າ*

ໃນເດືອນພຶດສະພາ 2014, IASB ໄດ້ອອກ IFRS 15 ລາຍຮັບຈາກສັນຍາກັບລູກຄ້າ, ມີຜົນບັງຄັບໃຊ້ສໍາລັບປີເລີ່ມຕົ້ນໃນວັນທີ 1 ມັງກອນ 2018 ພ້ອມກັບອະນຸຍາດໃຫ້ສາມາດນໍາໃຊ້ກ່ອນໄດ້. IFRS 15 ໄດ້ກໍານົດຫຼັກການພື້ນຖານສໍາລັບການຮັບຮູ້ລາຍຮັບ ແລະ ຈະສາມາດນໍາໃຊ້ກັບທຸກໆສັນຍາທີ່ມີກັບລູກຄ້າ. ຢ່າງໃດກໍຕາມ, ລາຍຮັບດອກເບ້ຍ ແລະ ຄ່າທໍານຽມທີ່ຕິດພັນກັບເຄື່ອງມືທາງການເງິນ ແລະ ການເຊົ່າ ຈະຍັງຢູ່ນອກຂອບເຂດຂອງ IFRS 15 ແລະ ຈະຍັງຖືກບັງຄັບໃຊ້ໂດຍການມາດຕະຖານອື່ນໆ (ຕົວຢ່າງ: IFRS 9, ແລະ IFRS 16 ການເຊົ່າ).

ລາຍຮັບພາຍໃຕ້ IFRS 15 ຈະຖືກຮັບຮູ້ເປັນລາຍຮັບ ກໍຕໍ່ເມື່ອສິນຄ້າ ແລະ ການບໍລິການໄດ້ຖືກໂອນ, ໂດຍທີ່ຜູ້ໂອນຄາດວ່າຈະໄດ້ຮັບຜົນຕອບແທນຈາກສິນຄ້າ ແລະ ການບໍລິການດັ່ງກ່າວ. ມາດຕະຖານດັ່ງກ່າວຍັງກໍານົດລາຍລະອຽດໃນການເປີດເຜີຍ ກ່ຽວກັບລັກສະນະ, ຂອບເຂດ ແລະ ໄລຍະເວລາ ເຊັ່ນດຽວກັນກັບຄວາມບໍ່ແນ່ນອນຂອງລາຍຮັບ ແລະ ກະແສເງິນສົດຈາກລູກຄ້າ.

ສາຂາບໍ່ໄດ້ນໍາໃຊ້ IFRS 15 ລ່ວງໜ້າ ແລະ ຂະນະນີ້ແມ່ນກໍາລັງປະເມີນຜົນກະທົບຢູ່.

*IFRS 16 ການເຊົ່າ*

IASB ອອກມາດຕະຖານບັນຊີໃຫມ່ສໍາລັບການເຊົ່າ - IFRS 16 ການເຊົ່າ ໃນເດືອນມັງກອນປີ 2016. ມາດຕະຖານໃໝ່ດັ່ງກ່າວບໍ່ໄດ້ມີການປ່ຽນແປງການບັນຊີທີ່ສໍາຄັນສໍາລັບການເຊົ່າ ຕໍ່ກັບຜູ້ໃຫ້ເຊົ່າ. ຢ່າງໃດກໍຕາມ, ມັນໄດ້ກໍານົດໃຫ້ຜູ້ເຊົ່າ ຮັບຮູ້ການເຊົ່າທັງໝົດເປັນຫນີ້ສິນໃຫ້ເຊົ່າໃນໃບລາຍງານຖານະການເງິນຂອງພວກເຂົາ ໂດຍສອດຄ່ອງກັບສິດໃນການນໍາໃຊ້ຊັບສິນ. ຜູ້ເຊົ່າຕ້ອງໄດ້ນໍາໃຊ້ຮູບແບບດຽວສໍາລັບການຮັບຮູ້ການເຊົ່າທັງຫມົດ, ແຕ່ວ່າຈະມີທາງເລືອກທີ່ຈະບໍ່ຮັບຮູ້ການເຊົ່າທີ່ມີໄລຍະສັ້ນ ແລະ ການເຊົ່າທີ່ມີມູນຄ່າຕໍ່າ. ໂດຍທົ່ວໄປ, ກໍາໄລ ຫຼື ຂາດທຶນໃນການຮັບຮູ້ສໍາລັບການຮັບຮູ້ການເຊົ່າຈະຄ້າຍຄືກັນກັບການບັນຊີການເຊົ່າທາງການເງິນໃນປັດຈຸບັນ ເຊິ່ງລາຍຈ່າຍດອກເບ້ຍ ແລະ ຄ່າຫຼຸ້ຍຫ້ຽນຈະຖືກຮັບຮູ້ແຍກຕ່າງຫາກໃນໃບລາຍງານຜົນການດໍາເນີນງານ.

IFRS 16 ມີຜົນບັງຄັບໃຊ້ສໍາລັບປີທີ່ເລີ່ມຕົ້ນນະວັນທີ ຫຼື ຫຼັງວັນທີ 1 ມັງກອນ 2019. ມາດຕະຖານລາຍຮັບໃຫມ່ດັ່ງກ່າວສາມາດນໍາໃຊ້ລ່ວງໜ້າໄດ້, IFRS 15, ໄດ້ຖືກນໍາໃຊ້ໃນວັນດຽວກັນ. ຜູ້ເຊົ່າຈະຕ້ອງນໍາໃຊ້ IFRS 16 ໂດຍນໍາໃຊ້ຍ້ອນຫຼັງກັບຄືນແບບເຕັມ ຫຼື ບສງສ່ວນ.

ສາຂາບໍ່ໄດ້ນໍາໃຊ້ IFRS 16 ລ່ວງຫນ້າ ແລະ ຂະນະນີ້ແມ່ນກໍາລັງປະເມີນຜົນກະທົບຢູ່.

## 5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *5.13 ມາດຕະຖານທີ່ໄດ້ອອກແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້* (ຕໍ່)

*ດັດແກ້ IAS 12 ອາກອນກຳໄລ*

ໃນເດືອນມັງກອນ 2016, IASB ໄດ້ດັດແກ້ IAS 12 ແລະ ມີການຊີ້ແຈງເຖິງການບັນທຶກບັນຊີຂອງຊັບສິນອາກອນເຍື້ອນຊຳລະຂອງເຄື່ອງທາງການເງິນ ທີ່ຖືກວັດແທກຕາມມູນຄ່າຍຸດຕິທຳ ແຕ່ຈະຖືກວັດແທກທີ່ມູນຄ່າຕົ້ນທຶນສຳລັບຈຸດປະສົງທາງດ້ານອາກອນ. ການດັດແກ້ແມ່ນຜົນບັງຄັບໃຊ້ເລີ່ມຈາກວັນທີ 1 ມັງກອນ 2017. ສາຂາກຳລັງປະເມີນຜົນກະທົບ ແຕ່ບໍ່ໄດ້ຄາດຄະເນວ່າປະຕິບັດຕາມການດັດແກ້ດັ່ງກ່າວ ຈະມີການຜົນກະທົບມີສຳຄັນຕໍ່ກັບເອກະສານລາຍງານການເງິນ.

*ດັດແກ້ IAS 7 ໃບລາຍງານກະແສເງິນສົດ*

ໃນເດືອນມັງກອນ 2016 IASB ໄດ້ດັດແກ້ IAS 7 ໃບລາຍງານກະແສເງິນສົດ ເພື່ອຈຸດປະສົງໃນການປັບປຸງການເປີດເຜີຍກິດຈະກຳທາງການເງິນ ແລະ ຊ່ວຍໃຫ້ຜູ້ນຳໃຊ້ມີຄວາມເຂົ້າໃຈຫຼາຍຂຶ້ນຕໍ່ກັບການລາຍງານຖານະສະພາບຄ່ອງຂອງນິຕິບຸກຄົນ. ພາຍໃຕ້ຂໍ້ກຳນົດໃໝ່ ນິຕິບຸກຄົນຕ້ອງເປີຍເຜີຍການປ່ຽນແປງໃນໜີ້ສິນທາງການເງິນ ເຊິ່ງເປັນຜົນຂອງກິດຈະກຳທາງການເງິນ ເຊັ່ນ ການປ່ຽນແປງຈາກລາຍການກະແສເງິນສົດ ແລະ ບໍ່ແມ່ນກະແສເງິນສົດ (ຕົວຢ່າງ ກຳໄລ ແລະ ຂາດທຶນຈາກການແລກປ່ຽນເງິນຕາຕ່າງປະເທດ). ການດັດແກ້ມີຜົນບັງຄັບໃຊ້ເລີ່ມຈາກວັນທີ 1 ມັງກອນ 2017. ສາຂາກຳລັງປະເມີນຜົນກະທົບຢູ່.

## 6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ

ໃນການສ້າງເອກະສານລາຍງານການເງິນຂອງສາຂາ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມທັງການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີຄວາມຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງສາຂາ, ຄະນະບໍລິຫານໄດ້ພິຈາລະນາດັ່ງນີ້ ເຊິ່ງມີຜົນກະທົບອັນສຳຄັນໃຫ້ແກ່ຕົວເລກການຮັບຮູ້ທີ່ມີຄວາມສ່ຽງຫຼາຍ ເຊິ່ງຜົນມາຈາກເຄື່ອງມືການດັດແກ້ທີ່ສຳຄັນຂອງມູນຄ່າຕົວຈິງຂອງຊັບສິນ ແລະ ໜີ້ສິນພາຍໃນປີການບັນຊີໃນຕໍ່ໜ້າ. ສາຂາໄດ້ອີງໃສ່ຂໍ້ສົມມຸດຖານ ແລະ ການຄາດຄະເນຂອງຕົນ ກ່ຽວກັບການກຳນົດເວລາທີ່ມີການລາຍງານທາງດ້ານການເງິນທີ່ຖືກສ້າງຂຶ້ນ. ສະພາບການ ແລະ ສົມມຸດຖານ ກ່ຽວກັບການພັດທະນາໃນອະນາຄົດ, ຢ່າງໃດກໍ່ຕາມ, ອາດຈະມີການປ່ຽນແປງ ເນື່ອງມາຈາກການປ່ຽນແປງຂອງຕະຫຼາດ ຫຼື ສະພາບການທີ່ຄວບຄຸມສາຂາ. ການປ່ຽນແປງດັ່ງກ່າວໄດ້ສະທ້ອນໃຫ້ເຫັນໃນຂໍ້ສົມມຸດຖານໃນເວລາທີ່ເກີດຂຶ້ນ.

### *6.1 ຄວາມສືບເນື່ອງໃນການດຳເນີນທຸລະກິດ*

ຄະນະບໍລິຫານຂອງສາຂາໄດ້ປະເມີນຄວາມອາດສາມາດຂອງສາຂາ ກໍ່ຄືຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ເປັນທີ່ໜ້າພໍໃຈວ່າສາຂາມີແຫລ່ງທຶນ ເພື່ອສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດ. ຍິ່ງໄປກວ່ານັ້ນ, ຄະນະບໍລິ ຫານບໍ່ມີສິ່ງຜິດປົກກະຕິໃດໆເປັນທີ່ໜ້າສົງໃສຕໍ່ກັບຄວາມອາດສາມາດຂອງສາຂາ ເພື່ອສືບຕໍ່ດຳເນີນງານກໍ່ຄືຄວາມສືບເນື່ອງໃນການດຳເນີນທຸລະກິດ. ເພາະສະນັ້ນ, ບົດລາຍງານການເງິນ ສັງລວມກິດຈະການຍັງສືບຕໍ່ສ້າງຂຶ້ນບົນພື້ນຖານ ຄວາມສືບເນື່ອງໃນການດຳເນີນທຸລະກິດ.

## 6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

### 6.2 *ມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນ*

ມູນຄ່າຍຸດຕິທຳຂອງບັນດາເຄື່ອງມືດ້ານການເງິນແມ່ນລາຄາທີ່ຄວນຈະໄດ້ຮັບຈາກການຂາຍຊັບສິນ ຫຼື ໄດ້ຈ່າຍສຳລັບການໂອນໜີ້ສິນ ຕາມລາຍການເຄື່ອນໄຫວຢູ່ໃນຫຼັກການ (ຫຼື ຜົນປະໂຫຍດສູງສຸດ) ໃນຕະຫຼາດນະເວລາທີວັດແທກພາຍໃຕ້ເງື່ອນໄຂຕະຫຼາດໃນປະຈຸບັນ (ລາຄາຈິງ) ໂດຍບໍ່ຄຳນຶງເຖິງວ່າເປັນລາຄາຈາກການສັງເກດການຕົວຈິງ ຫຼື ຈາກການຄາດຄະເນຈາກການນຳໃຊ້ເຕັກນິກການຕີມູນຄ່າອື່ນ. ໃນເວລາທີ່ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນຖືກບັນທຶກໃນໃບລາຍງານສະຖານະການເງິນແລ້ວ ແມ່ນບໍ່ສາມາດປ່ຽນໄປຕາມການເຄື່ອນໄຫວຂອງຕະຫຼາດ, ເຊິ່ງໄດ້ກຳນົດວິທີເຕັກນິກການຕີມູນຄ່າລວມເຖິງຮູບແບບການຕີມູນຄ່າ. ປັດໄຈຂອງຮູບແບບເຫຼົ່ານີ້ໄດ້ມາຈາກການສັງເກດການຄວາມເປັນໄປໄດ້ໃນຕະຫຼາດ, ແຕ່ວ່າຖ້າຫາກບໍ່ມີຄວາມເປັນໄປໄດ້, ການຄາດຄະແນແມ່ນມາຈາກການສ້າງມູນຄ່າຍຸດຕິທຳ. ການຕັດສິນໃຈ ແລະ ການຄາດຄະເນລວມເຖິງການພິຈາລະນາດ້ານສະພາບຄ່ອງ ແລະ ຮູບແບບຂອງປັດໄຈທີ່ກ່ຽວຂ້ອງກັບລາຍການຄວາມສ່ຽງດ້ານໜີ້ສິນ (ທັງສ່ວນເຈົ້າຂອງ ແລະ ພາກສ່ວນທີ່ກ່ຽວຂ້ອງ), ການດັດແກ້ມູນຄ່າທຶນ, ຄວາມສຳພັນກັນ ແລະ ການເໜັງຕີງ. ສຳລັບລາຍລະອຽດອື່ນໆກ່ຽວກັບການກຳນົດມູນຄ່າຍຸດຕິທຳ ກະລຸນາເບິ່ງເອກະສານຊ້ອນທ້າຍ ເລກທີ 32.

### 6.3 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ*

ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍເລກທີ 5.2.3, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຄົງທີ່ ຕາມອາຍຸຂອງເງິນກູ້ ແລະ ເງິນຝາກ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໄໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

### 6.4 *ການຂາດທຶນຈາກຄ່າເສື່ອມມູນຄ່າຂອງເງິນກູ້ ແລະ ເງິນລ່ວງໜ້າ*

ສາຂາໄດ້ມີການທົບທວນເງິນໃຫ້ກູ້ ແລະ ເງິນລ່ວງໜ້າທີ່ສຳຄັນເປັນແຕ່ລະບຸກຄົນຕາມແຕ່ລະວັນທີລາຍງານ ເພື່ອປະເມີນວ່າການຂາດທຶນຈາກຄ່າເສື່ອມມູນຄ່າ ຄວນຖືກບັນທຶກລົງໃນໃບລາຍງານຜົນການດຳເນີນງານ ຫຼື ບໍ່.

ວິທີການປະເມີນຄ່າເສື່ອມມູນຄ່າຂອງຊັບສິນທີ່ບັນທຶກໂດຍວິທີຫັກລົບຕົ້ນທຶນ ເປັນຜົນໃຫ້ມີການບັນທຶກເງິນແຮສຳລັບ:

- ການເສື່ອມມູນຄ່າສະເພາະ;
- ການເສື່ອມມູນຄ່າເປັນກຸ່ມ

ລາຍລະອຽດຂອງແຕ່ລະປະເພດໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍ ເລກທີ 5.4.1. ເຊິ່ງປະກອບດ້ວຍການຕັດສິນໃຈຂອງຄະນະບໍລິຫານ, ໂດຍສະເພາະແລ້ວຈະມີການປະເມີນມູນຄ່າ ແລະ ກຳນົດເວລາຂອງກະແສເງິນສົດໃນອະນາຄົດ ແລະ ມູນຄ່າຫຼັກຊັບຄ້ຳປະກັນ ເມື່ອມີການຂາດທຶນຈາກຄ່າເສື່ອມມູນຄ່າ. ການປະເມີນດັ່ງກ່າວມາຈາກຈຳນວນຂອງປັດໄຈ, ການປ່ຽນແປງຂອງລາຍການທີ່ເຮັດໃຫ້ເກີດຄວາມແຕກຕ່າງຂອງຜົນຕອບແທນ.

## 7. ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

| | *2016* | *2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ລາຍຮັບດອກເບ້ຍຈາກເງິນຝາກຢູ່ທະນາຄານອື່ນ | 1,260 | 17 |
| ລາຍຮັບດອກເບ້ຍຈາກເງິນກູ້ | 11,430 | 2,611 |
| ລາຍຮັບດອກເບ້ຍຈາກຫຼັກຊັບຖືໄວ້ຈົນຄົບກຳນົດ | 21,470 | 3,925 |
| | **34,160** | **6,553** |

## 8. ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

| | *2016* | *2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ລາຍຈ່າຍດອກເບ້ຍເງິນຝາກຂອງທະນາຄານອື່ນ | 8,544 | 1,378 |
| ລາຍຈ່າຍດອກເບ້ຍເງິນຝາກຂອງລູກຄ້າ | 795 | 127 |
| | **9,339** | **1,505** |

## 9. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

| | *2016* | *2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:** | | |
| ຄ່າບໍລິການຊຳລະສະສາງ | 802 | 178 |
| ຄ່າທຳນຽມ ແລະ ຄ່າບໍລິການອື່ນໆ | 1,018 | 2 |
| | **1,820** | **180** |

## 10. ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ

| | *2016* | *2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ:** | | |
| ຄ່າທຳນຽມບໍລິການຊຳລະສະສາງ | 51 | 6 |
| ຄ່າທຳນຽມຊຳລະສະສາງໃຫ້ທະນາຄານກາງ | 5 | 2 |
| ຄ່າສະມາຊິກ | 148 | 49 |
| | **204** | **57** |

## 11. ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

| | *2016*<br>*ລ້ານກີບ* | *2015*<br>*ລ້ານກີບ* |
|---|---|---|
| ກຳໄລຈາກສ່ວນຕ່າງການຊື້ຂາຍເງິນຕາຕ່າງປະເທດ | 926 | 404 |
| ຂາດທຶນຈາກສ່ວນຕ່າງການຊື້ຂາຍເງິນຕາຕ່າງປະເທດ | - | (10) |
| | **926** | **394** |

## 12. ລາຍຈ່າຍເງິນເດືອນ

| | *2016*<br>*ລ້ານກີບ* | *2015*<br>*ລ້ານກີບ* |
|---|---|---|
| ຄ່າແຮງງານ ແລະ ເງິນອຸດໜູນ | 9,768 | 5,540 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 472 | 2,865 |
| | **10,240** | **8,405** |

## 13. ລາຍຈ່າຍອື່ນໆໃນການດຳເນີນງານ

| | *2016*<br>*ລ້ານກີບ* | *2015*<br>*ລ້ານກີບ* |
|---|---|---|
| ຄ່າເຊົ່າຫ້ອງການ | 2,185 | 2,184 |
| ຄ່າບໍລິການພາຍນອກ | 163 | 484 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 284 | 66 |
| ໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 51 | 195 |
| ຄ່າໂທລະຄົມມະນາຄົມ | 801 | 716 |
| ຄ່າຝຶກອົບຮົມ, ປະຊຸມ ແລະ ສຳມະນາ | 1,199 | 3,496 |
| ຄ່ານ້ຳ ແລະ ຄ່າໄຟຟ້າ | 813 | 227 |
| ຄ່າກວດສອບ ແລະ ນັກກົດໝາຍ | 125 | 102 |
| ລາຍຈ່າຍອື່ນໆ | 2,393 | 1,654 |
| | **8,014** | **9,124** |

**14. ເງິນສົດ ແລະ ເງິນຝາກຢູ່ ທະນາຄານແຫ່ງ ສປປ ລາວ ("ທຫລ")**

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ເງິນສົດໃນຄັງທີ່ເປັນເງິນກີບ | 2,065 | 1,486 |
| ເງິນສົດໃນຄັງທີ່ເປັນເງິນຕາຕ່າງປະເທດ | 8,595 | 2,774 |
| ເງິນຝາກຢູ່ ທຫລ | **375,356** | **367,863** |
| - *ເງິນຝາກກະແສລາຍວັນ* | *345,212* | *335,498* |
| - *ເງິນຝາກພາກບັງຄັບ* | *30,139* | *4,740* |
| - *ເງິນຝາກຄ້ຳປະກັນທຶນຈົດທະບຽນ* | *5* | *27,625* |
| | **386,016** | **372,123** |

ເງິນຝາກຢູ່ ທຫລ ມີເງິນຝາກກະແສລາຍວັນ, ເງິນຝາກພາກບັງຄັບ, ເງິນຝາກຄ້ຳປະກັນທຶນຈົດທະບຽນ. ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

ຕາມຂໍ້ກຳນົດຂອງ ທຫລ, ສາຂາຕ້ອງໄດ້ຮັກສາຄັງແຮເງິນສົດໄວ້ກັບ ທຫລ ໃນຮູບແບບເງິນຝາກພາກບັງຄັບ ເຊິ່ງຖືກຄິດໄລ່ໃນອັດຕາ 5.00% ສຳລັບເງິນກີບ ແລະ 10.00% ສຳລັບສະກຸນເງິນຕາຕ່າງປະເທດ, ເດືອນໜຶ່ງສອງຄັ້ງ, (2015: 5% ແລະ 10%) ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕ່ຳກ່ວາ 12 ເດືອນ. ພາຍໃນປີ, ສາຂາໄດ້ຮັກສາເງິນຝາກພາກບັງຄັບ ເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດຂອງ ທຫລ.

ອີງຕາມດຳລັດເລກທີ 02/ນຍ ຂອງ ທຫລ, ສາຂາຂອງທະນາຄານຕ່າງປະເທດແມ່ນຖືກກຳນົດໃຫ້ຮັກສາເງິນຝາກພິເສດໄວ້ກັບ ທຫລ ເທົ່າກັບ 25% ຂອງທຶນຈົດທະບຽນທີ່ຖອກແລ້ວ ເພື່ອຮັບປະກັນຄວາມສືບເນື່ອງໃນການດຳເນີນງານ. ສາຂາຖືກອະນຸຍາດໂດຍ ທຫລ ໂດຍໜັງສືທາງການເລກທີ 194/ກຄທ ລົງວັນທີ 18 ພຶດສະພາ 2015, ເລກທີ 239/ກຄທ ລົງວັນທີ 18 ມິຖຸນາ 2015 ແລະ 334/ກຄທ ລົງວັນທີ 19 ສິງຫາ 2016 ໃຫ້ຖອນເງິນຈາກບັນຊີເງິນຝາກເພື່ອເປັນທຶນໃນການດຳເນີນງານ. ນະວັນທີ 31 ທັນວາ 2016 ຍອດເຫຼືອເງິນຝາກພິເສດຂອງສາຂາມີ 5 ລ້ານກີບ.

## 15. ເງິນຝາກຢູ່ກັບທະນາຄານອື່ນ

ເງິນຝາກຢູ່ທະນາຄານອື່ນນະວັນທີ 31 ທັນວາ 2016 ປະກອບດ້ວຍເງິນຝາກກະແສລາຍວັນ ແລະ ເງິນຝາກປະຈຳ. ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກກະແສລາຍວັນກັບທະນາຄານພາຍໃນປະເທດ** | **40** | **984** |
| - ທະນາຄານ ອຸດສະຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງ | 40 | 984 |
| **ເງິນກະແສລາຍວັນກັບທະນາຄານຕ່າງປະເທດ** | **164,933** | **36,791** |
| - ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ | 53,736 | 6,019 |
| - ທະນາຄານແຫ່ງປະເທດຈີນ, ສາຂາຮົງກົງ | 238 | - |
| - ທະນາຄານແຫ່ງປະເທດຈີນ, ສາຂາໄທ | 14,689 | 1,074 |
| - ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 17,430 | 28,889 |
| - ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | 78,521 | - |
| - ທະນາຄານແຫ່ງປະເທດຈີນ, ສາຂາແຟັງເຟີດ | 319 | 809 |
| **ເງິນຝາກປະຈຳກັບທະນາຄານຕ່າງປະເທດ** | **245,520** | **-** |
| - ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 245,520 | - |
| **ດອກເບ້ຍຄ້າງຮັບ** | **144** | **2** |
| | **410,637** | **37,777** |

ເງິນຝາກປະຈຳຢູ່ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ ມີກຳນົດ 1 ເດືອນ ແລະ ມີອັດຕາດອກເບ້ຍ 1.64%-1.74% ຕໍ່ປີ.

## 16. ຫຼັກຊັບຖືໄວ້ຈົນຄົບກຳນົດ

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| ພັນທະບັດອອກໂດຍ ທຫລ | 409,200 | 407,400 |
| ດອກເບ້ຍຄ້າງຮັບ | 4,547 | 3,925 |
| | **413,747** | **411,325** |

ພັນທະບັດອອກໂດຍ ທຫລ ມີກຳນົດ 5 ປີ ແລະ ມີອັດຕາດອກເບ້ຍ 4.86% ຕໍ່ປີ.

## 17. ເງິນກູ້ໃຫ້ລູກຄ້າ

| | *31 ທັນວາ 2016*<br>*ລ້ານກີບ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|
| ເງິນກູ້ໃຫ້ລູກຄ້າທັງໝົດ | 122,404 | 97,888 |
| ດອກເບ້ຍຄ້າງຮັບ | 340 | 271 |
| ລົບ: ເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ<br>*(ບົດອະທິບາຍເລກທີ 18)* | (1,224) | (979) |
| | **121,520** | **97,180** |

ອັດຕາດອກເບ້ຍສຳລັບເງິນກູ້ໃຫ້ລູກຄ້າພາຍໃນປີມີດັ່ງນີ້:

| | *ສຳລັບປີທີ່ສິ້ນສຸດ*<br>*ວັນທີ 31 ທັນວາ 2016*<br>*% ຕໍ່ປີ* | *ສຳລັບປີທີ່ສິ້ນສຸດ*<br>*ວັນທີ 26 ມີນາ 2015*<br>*ເຖິງ 31 ທັນວາ 2015*<br>*% ຕໍ່ປີ* |
|---|---|---|
| ເງິນກູ້ທີ່ເປັນສະກຸນເງິນກີບ | 8.00% - 11.00% | 11.00% |
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 7.75% | 7.04% |

***ການວິເຄາະຂອງເງິນກູ້ໃຫ້ລູກຄ້າ***

*ການວິເຄາະຕາມສະກຸນເງິນ*

| | *31 ທັນວາ 2016*<br>*ລ້ານກີບ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|
| ເງິນກູ້ທີ່ເປັນສະກຸນເງິນກີບ | 73,300 | 49,000 |
| ເງິນກູ້ທີ່ເປັນສະກຸນເງິນໂດລາ | 49,104 | 48,888 |
| | **122,404** | **97,888** |

*ວິເຄາະຕາມມື້ຄົບກຳນົດ*

| | *31 ທັນວາ 2016*<br>*ລ້ານກີບ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|
| ເງິນກູ້ໄລຍະສັ້ນ | 24,300 | - |
| ເງິນກູ້ໄລຍະກາງ | 98,104 | 97,888 |
| ເງິນກູ້ໄລຍະຍາວ | - | - |
| | **122,404** | **97,888** |

*ວິເຄາະຕາມພາກສ່ວນເສດຖະກິດ*

| | *31 ທັນວາ 2016*<br>*ລ້ານກີບ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|
| ບໍລິສັດອຸດສາຫະກຳ | 24,300 | - |
| ບໍລິສັດກໍ່ສ້າງ | 49,000 | 49,000 |
| ບໍລິສັດກະສິກຳ | 49,104 | 48,888 |
| | **122,404** | **97,888** |

## 18. ເງິນແຮສຳລັບໜີ້ເສຍ

ການເຄື່ອນໄຫວຂອງເງິນແຮສຳລັບໜີ້ເສຍປະກອບມີດັ່ງນີ້:

| | *ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016 ລ້ານກີບ* | *ສຳລັບໄລຍະແຕ່ ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|---|
| **ຍອດເຫຼືອຕົ້ນປີ** | **979** | **-** |
| ລາຍຈ່າຍເງິນແຮສຸດທິສຳລັບເງິນແຮໜີ້ເສຍພາຍໃນປີ | 243 | 979 |
| ສ່ວນຜິດດ່ຽງເງິນຕາຕ່າງປະເທດ | 2 | - |
| **ຍອດເຫຼືອທ້າຍປີ** | **1,224** | **979** |

## 19. ຊັບສິນບັດ ແລະ ອຸປະກອນ

ການເຄື່ອນໄຫວຂອງຊັບສິນບັດ ແລະ ອຸປະກອນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2016 ມີດັ່ງນີ້:

| | *ອາຄານ ແລະ ການປັບປຸງ ລ້ານກີບ* | *ເຟີນີເຈີ ແລະ ເຄື່ອງຕົບແຕ່ງ ລ້ານກີບ* | *ຄອມພິວເຕີ ລ້ານກີບ* | *ພາຫະນະ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ມູນຄ່າເດີມ:** | | | | | |
| ຍອດເຫຼືອຕົ້ນປີ | 7,448 | 2,742 | 4,181 | 1,176 | 15,547 |
| ຮັບເຂົ້າເພີ່ມພາຍໃນປີ | - | - | 25 | - | 25 |
| ຍອດເຫຼືອທ້າຍປີ | 7,448 | 2,742 | 4,206 | 1,176 | 15,572 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ຍອດເຫຼືອຕົ້ນປີ | 1,118 | 399 | 804 | 154 | 2,475 |
| ຄ່າຫຼຸ້ຍຫ້ຽນພາຍໃນໄລຍະ | 1,490 | 532 | 1,077 | 190 | 3,289 |
| ຍອດເຫຼືອທ້າຍປີ | 2,608 | 931 | 1,881 | 344 | 5,764 |
| **ມູນຄ່າສຸດທິ:** | | | | | |
| ຍອດເຫຼືອຕົ້ນປີ | 6,330 | 2,343 | 3,377 | 1,022 | 13,072 |
| ຍອດເຫຼືອທ້າຍປີ | 4,840 | 1,811 | 2,325 | 832 | 9,808 |

## 20. ຊັບສິນອື່ນໆ

| | *31 ທັນວາ 2016 ລ້ານກີບ* | *31 ທັນວາ 2015 ລ້ານກີບ* |
|---|---|---|
| ລາຍຈ່າຍລ່ວງໜ້າ | 17,619 | 19,669 |
| | **17,619** | **19,669** |

## 21. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກກະແສລາຍວັນຈາກທະນາຄານອື່ນ** | | |
| ທະນາຄານ ເອເອັນແຊັດ (ລາວ) ຈຳກັດ | 81,900 | 30,000 |
| **ເງິນຝາກປະຈຳຈາກທະນາຄານອື່ນ** | | |
| ທະນາຄານ ເອເອັນແຊັດ (ລາວ) ຈຳກັດ (ມີກຳນົດ 3 ເດືອນ, ອັດຕາດອກເບ້ຍ 1.55% ຕໍ່ປີ) | 41,097 | - |
| **ທຶນກູ້ຢືມຈາກທະນາຄານຕ່າງປະເທດ** | | |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ (ມີກຳນົດ 5 ປີ , ອັດຕາດອກເບ້ຍ 2.41% ຕໍ່ປີ) | 409,200 | 407,400 |
| ດອກເບ້ຍຄ້າງຈ່າຍ | 2,031 | 1,378 |
| | **534,228** | **438,778** |

## 22. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | *31 ທັນວາ 2016* | *31 ທັນວາ 2015* |
|---|---|---|
| | *ລ້ານກີບ* | *ລ້ານກີບ* |
| **ເງິນຝາກກະແສລາຍວັນ** | | |
| - ເປັນເງິນກີບ | 5,745 | 2,630 |
| - ເປັນເງິນຕາຕ່າງປະເທດ | 287,883 | 49,046 |
| | **293,628** | **51,676** |
| **ເງິນຝາກປະຢັດ** | | |
| - ເປັນເງິນກີບ | 3,040 | 1,622 |
| - ເປັນເງິນຕາຕ່າງປະເທດ | 29,625 | 16,561 |
| | **32,665** | **18,183** |
| **ເງິນຝາກປະຈຳ** | | |
| - ເປັນເງິນກີບ | 2,659 | 1,093 |
| - ເປັນເງິນຕາຕ່າງປະເທດ | 96,292 | 2,140 |
| | **98,951** | **3,233** |
| **ດອກເບ້ຍຄ້າງຈ່າຍ** | 330 | 38 |
| | **425,574** | **73,130** |

## 22. ໜີ້ຕ້ອງສົ່ງໃຫ້ລູກຄ້າ (ຕໍ່)

ອັດຕາດອກເບ້ຍຂອງໜີ້ຕ້ອງສົ່ງໃຫ້ລູກຄ້າມີດັ່ງນີ້:

| | *ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016 ອັດຕາດອກເບ້ຍ* | *ສໍາລັບໄລຍະແຕ່ ວັນທີ 26 ມີນາ 2015 ເຖິງ 31ທັນວາ 2015 ອັດຕາດອກເບ້ຍ* |
|---|---|---|
| ເງິນຝາກກະແສລາຍວັນເປັນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດເປັນກີບ | 1.10% | 1.00% |
| ເງິນຝາກປະຢັດເປັນໂດລາ | 1.25% | 1.25% |
| ເງິນຝາກປະຢັດເປັນບາດ | 0.50% | 0.50% |
| ເງິນຝາກປະຈໍາເປັນກີບ | 3.00% - 6.50% | 3.00% - 9.00% |
| ເງິນຝາກປະຈໍາເປັນໂດລາ | 2.00% - 6.25% | 2.00% - 6.25% |
| ເງິນຝາກປະຈໍາເປັນບາດ | 0.75% - 4.50% | 0.75% - 4.50% |

## 23. ໜີ້ສິນອື່ນໆ

| | *31 ທັນວາ 2016 ລ້ານກີບ* | *31 ທັນວາ 2015 ລ້ານກີບ* |
|---|---|---|
| ໜີ້ຕ້ອງສົ່ງໃຫ້ທະນາຄານແຫ່ງປະເທດຈີນ, | | |
| ສໍານັກງານໃຫຍ່ | 8 | 45,776 |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 3,962 | 3,679 |
| ໜີ້ສິນອື່ນໆ | 316 | 101 |
| | **4,286** | **49,556** |

## 24. ອາກອນ

*ອາກອນກຳໄລ ("ອກລ")*

ສາຂາໄດ້ຫັກເງິນແຮໄວ້ສຳລັບອາກອນກຳໄລພາຍໃນປີ ອີງຕາມກົດໝາຍອາກອນຂອງ ສປປ ລາວ. ສາຂາມີພັນທະຈ່າຍອາກອນກຳໄລອີງຕາມກົດໝາຍອາກອນເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ເຊິ່ງມີຜົນບັງຄັບໃຊ້ວັນທີ 24 ພຶດສະພາ 2016.

| | *ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016 ລ້ານກີບ* | *ສຳລັບໄລຍະແຕ່ ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|---|
| ກຳໄລ/(ຂາດທຶນ) ກ່ອນອາກອນພາຍໃຕ້ IFRS | 5,577 | (15,418) |
| ສ່ວນຕ່າງລະຫວ່າງ IFRS ແລະ ລະບົບບັນຊີລາວ | (1,065) | 1,313 |
| **ຂາດທຶນພາຍໃຕ້ລະບົບບັນຊີລາວ** | **4,512** | **(14,105)** |
| ປັບປຽບອາກອນທີ່ເກີດຈາກຄວາມແຕກຕ່າງລະຫວ່າງການປະຕິບັດທາງການບັນຊີ ແລະ ກົດໝາຍສ່ວຍສາອາກອນ | 169 | 745 |
| ຂາດທຶນຍົກມາຈາກປີຜ່ານມາ | (4,681) | - |
| | **-** | **(13,360)** |
| **ລາຍຮັບສຳລັບຫັກອາກອນພາຍໃຕ້ລະບົບບັນຊີລາວ** | - | - |
| **ລາຍຈ່າຍອາກອນກຳໄລ, ຕາມອັດຕາກົດໝາຍ 24%** | - | - |
| ອາກອນກຳໄລຕ້ອງມອບໃນຕົ້ນປີ/ໄລຍະ | - | - |
| ອາກອນກຳໄລຕ້ອງມອບພາຍໃນປີ/ໄລຍະ | - | - |
| **ອາກອນກຳໄລຕ້ອງມອບໃນທ້າຍປີ/ໄລຍະ** | - | - |

ລາຍການເສຍອາກອນຂອງສາຂາຂຶ້ນຢູ່ກັບການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປັບປຸງແປງຫຼັງຈາກມື້ໄລ່ລຽງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

***ຂາດທຶນຍົກມາຈາກປີຜ່ານມາ***

ອີງຕາມກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່ເລກທີ 70/ສພຊ ລົງວັນທີ 15 ທັນວາ 2015, ມາດຕາ 40, ຂາດທຶນພາຍໃນປີທີ່ໄດ້ຮັບການຢັ້ງຢືນຈາກເຈົ້າໜ້າທີ່ ຫຼື ບໍລິສັດກວດສອບອິດສະຫຼະ ແລະ ຮັບຮູ້ໂດຍເຈົ້າໜ້າທີ່ສ່ວນສາອາກອນ ແມ່ນສາມາດຍົກຍອດຂາດທຶນດັ່ງກ່າວມາຫັກລ້າງກຳໄລໃນປີຕໍ່ມາໄດ້ສາມປີ. ເມື່ອຜ່ານຊ່ວງສາມປີແລ້ວຍອດຂາດທຶນທີ່ເຫຼືອບໍ່ອະນຸຍາດໃຫ້ນຳມາຫັກລົບອີກ. ນະວັນທີ 31 ທັນວາ 2016, ສາຂາມີຍອດຂາດທຶນສະສົມ 8,679 ລ້ານກີບ (ນະວັນທີ 31 ທັນວາ 2015: 13,360 ລ້ານກີບ) ທີ່ສາມາດນຳມາຫັກລົບກັບກຳໄລທີ່ຕ້ອງເສຍອາກອນໄດ້ໃນອະນາຄົດ.

## 24. ອາກອນ (ຕໍ່)

ລາຍລະອຽດຂອງການຫັກລົບມີດັ່ງນີ້:

| *ປີເລີ່ມຕົ້ນ* | *ສາມາດນຳໃຊ້ໄດ້ເຖິງ* | *ມູນຄ່າຂາດທຶນ* | *ນຳໃຊ້ເຖິງວັນທີ 31 ທັນວາ 2016* | *ຄ່າປັບໄໝ* | *ບໍ່ທັນນຳໃຊ້ນະວັນທີ 31 ທັນວາ 2016* |
|---|---|---|---|---|---|
| 2015 | 2018 | (13,360) (*) | 4,681 | - | (8,679) |
| **ລວມ** | | **(13,360)** | **4,681** | **-** | **(8,679)** |

(*) ມູນຄ່າຂາດທຶນທີ່ຄາດຄະເນໄວ້ໃນການແຈ້ງເສຍອາກອນສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015 ບໍ່ຖືກກວດໂດຍເຈົ້າໜ້າທີ່ສ່ວຍສາອາກອນຈີນເຖິງວັນທີອອກບົດລາຍງານ.

## 25. ທຶນຈົດທະບຽນທີ່ຖອກແລ້ວ

ບໍ່ມີການປ່ຽນແປງສຳລັບທຶນຈົດທະບຽນທີ່ຖອກແລ້ວໃນປີ 2016.

## 26. ຂໍ້ມູນເພີ່ມເຕີມກ່ຽວກັບກະແສເງິນສົດ

***ເງິນສົດ ແລະ ລາຍການທຽບເທົ່າເງິນສົດ***

| | *31 ທັນວາ 2016*<br>*ລ້ານກີບ* | *31 ທັນວາ 2015*<br>*ລ້ານກີບ* |
|---|---|---|
| ເງິນສົດໃນຄັງ | 10,660 | 4,260 |
| ເງິນຝາກກະແສລາຍວັນຢູ່ ທຫລ | 345,212 | 335,498 |
| ເງິນຝາກກະແສລາຍວັນຢູ່ທະນາຄານອື່ນ | 165,038 | - |
| ເງິນຝາກປະຈຳຢູ່ທະນາຄານອື່ນ | 245,599 | 37,775 |
| | **766,509** | **377,533** |

## 27. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ, ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(a) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ:
- ມີການຄວບຄຸມ(ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມທົ່ວໄປກັບສາຂາ (ໃນນີ້ລວມມີບໍລິສັດແມ່, ສາຂາ ແລະ ສະມາຊິກຂອງ ສາຂາ);
- ມີຜົນປະໂຫຍດນຳກັນກັບສາຂາເຊິ່ງສົ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(b) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳສາຂາ;

(c) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງຜູ້ບໍລິຫານຫຼັກຂອງສາຂາ ຫຼື ທະນາຄານແມ່;

(d) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (a) ຫຼື (d);

(e) ພາກສ່ວນທີ່ກ່ຽວຂ້ອງ ກໍ່ແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼືອິດທິພົນອັນໃຫຍ່ ຫຼວງ, ຫຼື ມີສິດທິອຳນາດການໃນການອອກສຽງສ່ວນໃຫຍ່ຕໍ່ ທະນາຄານທີ່ດຳເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆ ພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້(c) ຫຼື (d); ຫຼື

(f) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງ ສາຂາ ຫຼື ທະນາຄານ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 31 ທັນວາ 2016 ມີດັ່ງຕໍ່ໄປນີ້:

| *ພາກສ່ວນກ່ຽວຂ້ອງ* | *ສາຍພົວພັນ* | *ທຸລະກຳ* | *31 ທັນວາ 2016 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* | *31 ທັນວາ 2015 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ລ້ານກີບ* |
|---|---|---|---|---|
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | ທະນາຄານແມ່ | ເງິນຝາກກະແສລາຍວັນຢູ່ ທະນາຄານແມ່ | 17,430 | 28,889 |
| | | ການກູ້ຢືມຈາກ ທະນາຄານແມ່ | (409,200) | (407,400) |
| | | ໜີ້ຕ້ອງສົ່ງອື່ນໆໃຫ້ ທະນາຄານແມ່ | (8) | (45,776) |
| | | ເງິນຝາກປະຈຳຢູ່ ທະນາຄານແມ່ | 245,520 | - |
| ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ | ບໍລິສັດໃນເຄືອ | ເງິນຝາກກະແສລາວວັນ | 53,736 | 6,019 |
| ທະນາຄານແຫ່ງປະເທດຈີນ, ສາຂາຮົງກົງ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 238 | - |
| ທະນາຄານແຫ່ງປະເທດຈີນ, ສາຂາໄທ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 14,689 | 1,074 |
| ທະນາຄານແຫ່ງປະເທດຈີນ, ສາຂານິວຢອກ | ບໍລິສັດໃນເຄືອ | ເງິນຝາກກະແສລາຍວັນ | 78,521 | - |

## 27. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວສຳຄັນກັບບັນດາພາກສ່ວນທີ່ກ່ຽວຂ້ອງໃນໄລຍະ ມີດັ່ງລຸ່ມນີ້:

| | *2016* *ລ້ານກີບ* | *2015* *ລ້ານກີບ* |
|---|---|---|
| ລາຍຮັບດອກຈາກເງິນຝາກປະຈຳຢູ່ສຳນັກງານໃຫຍ່ | 1,087 | - |
| ລາຍຈ່າຍດອກເບ້ຍສຳລັບເງິນກູ້ຈາກສຳນັກງານໃຫຍ່ | (2,031) | 1,378 |
| ລາຍຈ່າຍໃນການນຳໃຊ້ລະບົບໃຫ້ສຳນັກງານໃຫຍ່ | (214) | - |

***ການເຄື່ອນໄຫວກັບບຸກຄະລາກອນທີ່ສຳຄັນຂອງສາຂາ***

ຜົນຕອບແທນຕໍ່ກັບຄະນະບໍລິຫານມີດັ່ງນີ້:

| | *ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2016* *ລ້ານກີບ* | *ສຳລັບໄລຍະແຕ່ ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015* *ລ້ານກີບ* |
|---|---|---|
| ເງິນເດືອນ ແລະ ເງິນໂບນັດ | 2,512 | 1,527 |
| | **2,512** | **1,527** |

## 28. ນະໂຍບາຍການບໍລິຫານຄວາມສ່ຽງ

***ພາກສະເໜີ***

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕົວທີ່ເກີດຂຶ້ນໃນການດຳເນີນງານຂອງສາຂາ ແຕ່ມັນຖືກບໍລິຫານ(ຄຸ້ມຄອງ)ໂດຍຜ່ານຂັ້ນຕອນ, ວັດແທກ ແລະ ການຕິດຕາມຢ່າງຕໍ່ເນື່ອງ ເພື່ອຈຳກັດຂອບເຂດຄວາມສ່ຽງ ແລະ ນຳໃຊ້ການຄຸ້ມຄອງອື່ນໆ. ຂັ້ນຕອນການບໍລິຫານຄວາມສ່ຽງນີ້ເປັນສິ່ງທີ່ສຳຄັນຕໍ່ຄວາມສາມາດສ້າງກຳໄລຢ່າງຕໍ່ເນື່ອງຂອງສາຂາ ແລະ ແຕ່ລະໜ່ວຍງານພາຍໃນສາຂາຕ້ອງຮັບຜິດຊອບໃນການເປີດເຜີຍຄວາມສ່ຽງທີ່ຕິດພັນກັບໜ້າທີ່ຄວາມຮັບຜິດຊອບຂອງຕົນ.

ສາຂາໄດ້ເປີດເຜີຍຄວາມສ່ຽງສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງຕະຫຼາດ, ຫຼັງຈາກນັ້ນໄດ້ແບ່ງອອກເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງບໍ່ແມ່ນການຄ້າ. ນອກນັ້ນ, ສາຂາຍັງມີຄວາມສ່ຽງອື່ນໆອີກທີ່ເກີດຈາກການດຳເນີນງານ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດເຊັ່ນ: ການປ່ຽນແປງຂອງສະພາບແວດລ້ອມ, ເຕັກໂນໂລຊີ ແລະ ອຸດສາຫະກຳ. ນະໂຍບາຍຂອງສາຂາແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດໂດຍຜ່ານຂັ້ນຕອນ ແລະ ແຜນຍຸດທະສາດຂອງສາຂາ.

## 28. ນະໂຍບາຍການບໍລິຫານຄວາມສ່ຽງ (ຕໍ່)

***ໂຄງສ້າງການບໍລິຫານຄວາມສ່ຽງ***

ຄະນະບໍລິຫານແມ່ນມີຄວາມຮັບຜິດຊອບສຳລັບຂະບວນການບໍລິຫານຄວາມສ່ຽງໂດຍລວມ ແລະ ອະນຸມັດຫຼັກການ ແລະ ຍຸດທະສາດໃນການບໍລິຫານຄວາມສ່ຽງ.

ຄະນະບໍລິຫານໄດ້ແຕ່ງຕັ້ງພະນັກງານກວດກາຄວາມສ່ຽງເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມຕິດຕາມຄວາມສ່ຽງໂດຍລວມ ພາຍໃນຂອງທະນາຄານ.

ພະນັກງານກວດກາຄວາມສ່ຽງມີຄວາມຮັບຜິດຊອບໂດຍລວມໃນການພັດທະນາຍຸດທະສາດສຳລັບຄວາມສ່ຽງ ແລະ ການຈັດຕັ້ງປະຕິບັດຫຼັກການ, ຂອບເຂດວຽກງານ, ນະໂຍບາຍ ແລະ ຂໍ້ຈຳກັດ. ພະນັກງານກວດກາຄວາມສ່ຽງມີຮັບຜິດຊອບ ໃນການຕັດສິນໃຈການບໍລິຫານຄວາມສ່ຽງ ແລະ ຄວບຄຸມລະດັບຄວາມສ່ຽງ ແລະ ລາຍງານໃຫ້ຄະນະບໍລິຫານ.

ນະໂຍບາຍຂອງສາຂາແມ່ນຂັ້ນຕອນການບໍລິຫານຄວາມສ່ຽງຂອງສາຂາ ເຊິ່ງຖືກກວດກາທຸກໆປີໂດຍພາກສ່ວນກວດກາພາຍ ໃນຂອງທະນາຄານແຫ່ງປະເທດຈີນ ເຊິ່ງຈະກວດກາທັງຄວາມພຽງພໍຂອງຂັ້ນຕອນ ແລະ ການປະຕິບັດຕາມຂັ້ນຕອນທີ່ວາງ ອອກ. ກວດກາພາຍໃນຈະປຶກສາຜົນການກວດກາກັບຄະນະບໍລິຫານ, ແລະ ລາຍງານສິ່ງທີ່ພົບເຫັນ ແລະ ຄຳແນະນຳໃຫ້ຄະນະ ກຳມະການກວດກາຂອງທະນາຄານແຫ່ງປະເທດຈີນ.

## 29. ຄວາມສ່ຽງດ້ານອັດຕາດອກເບ້ຍ

ຄວາມສ່ຽງດ້ານອັດຕາດອກເບ້ຍເກີດຂຶ້ນຈາກການປ່ຽນແປງອັດຕາດອກເບ້ຍເຊິ່ງອາດກະທົບຕໍ່ກຳໄລໃນອານາຄົດ ຫຼື ມູນຄ່າ ຍຸດຕິທຳຂອງເຄື່ອງມືທາງການເງິນ. ສາຂາໄດ້ປະເຊີນກັບຄວາມສ່ຽງດ້ານອັດຕາດອກເບ້ຍເຊິ່ງເປັນຜົນຂອງຄວາມບໍ່ສອດຄ່ອງ ຂອງການຕັ້ງອັດຕາດອກເບ້ຍຄືນໃໝ່ຂອງຊັບສິນ ແລະ ໜີ້ສິນ. ສາຂາໄດ້ຈັດການກັບຄວາມສ່ຽງດັ່ງກ່າວໂດຍການຕັ້ງອັດຕາ ດອກເບ້ຍຂອງຊັບສິນ ແລະ ໜີ້ສິນຄືນໃໝ່ໂດຍຜ່ານຍຸດທະສາດການຄຸ້ມຄອງຄວາມສ່ຽງ. ເນື່ອງຈາກການບັນທຶກບັນຊີຂອງ ສາຂາ, ສາຂາບໍ່ສາມາດວິເຄາະຜົນກະທົບຂອງຄວາມສ່ຽງດ້ານອັດຕາດອກເບ້ຍໄດ້.

## 30. ຄວາມສ່ຽງດ້ານເງິນຕາ

ຄວາມສ່ຽງດ້ານເງິນຕາແມ່ນຄວາມສ່ຽງທີ່ເກີດຈາກການປ່ຽນແປງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ ເຊິ່ງກະທົບໃສ່ຖານະເງິນຕາຕ່າງປະເທດຂອງສາຂາ. ສາຂາໄດ້ກຳນົດເພດານຂອງຖານະເງິນຕາຕ່າງປະເທດແຕ່ລະສະກຸນເງິນພາຍໃຕ້ລະບົບການປະເມີນການຄວບຄຸມຄວາມສ່ຽງພາຍໃນ ແລະ ຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ. ແຕ່ລະຖານະແມ່ນໄດ້ຖືກຕິດຕາມກວດກາທຸກໆມື້ເພື່ອຮັບປະກັນໃຫ້ຖານະເງິນຕາຖືກຮັກສາໄວ້ຢູ່ໃນຂອບເຂດຂອງເພດານທີ່ໄດ້ສ້າງຂຶ້ນ.

ລາຍລະອຽດຂອງຊັບສິນ ແລະ ໜີ້ສິນທີ່ຖືກປ່ຽນເປັນລ້ານກີບໃນວັນທີ 31 ທັນວາ 2016 ມີດັ່ງນີ້:

| | *ກີບ* | *ໂດລາ ທຽບເທົ່າ* | *ບາດ ທຽບເທົ່າ* | *ອື່ນໆ ທຽບເທົ່າ* | *ລວມ ທຽບເທົ່າ* |
|---|---|---|---|---|---|
| | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* |
| **ຊັບສິນ** | | | | | |
| ເງິນສົດ ແລະ ເງິນຝາກຢູ່ ທຫລ | 283,967 | 94,816 | 4,672 | 2,561 | 386,016 |
| ເງິນຝາກຢູ່ທະນາຄານອື່ນ | - | 341,560 | 14,689 | 54,388 | 410,637 |
| ເງິນກູ້ໃຫ້ລູກຄ້າ (*) | 73,524 | 49,220 | - | - | 122,744 |
| ການລົງທຶນໃນຫຼັກຊັບ | - | 413,747 | - | - | 413,747 |
| ຊັບສິນບັດ ແລະ ອຸປະກອນ | 9,808 | - | - | - | 9,808 |
| ຊັບສິນອື່ນໆ | 17,619 | - | - | - | 17,619 |
| **ຊັບສິນທັງໝົດ** | **384,918** | **899,343** | **19,361** | **56,949** | **1,360,571** |
| **ໜີ້ສິນ ແລະ ທຶນ** | | | | | |
| **ໜີ້ສິນ** | | | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | 81,900 | 452,328 | - | - | 534,228 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | 11,540 | 337,723 | 19,712 | 56,599 | 425,574 |
| ໜີ້ສິນອື່ນໆ | (100,165) | 104,701 | (380) | 130 | 4,286 |
| **ໜີ້ສິນທັງໝົດ** | **(6,725)** | **894,752** | **19,332** | **56,729** | **964,088** |
| **ທຶນ** | **395,259** | **-** | **-** | **-** | **395,259** |
| **ໜີ້ສິນ ແລະ ທຶນທັງໝົດ** | **388,534** | **894,752** | **19,332** | **56,729** | **1,359,347** |
| **ມູນຄ່າສຸດທິທີ່ມີຄວາມສ່ຽງ** | **(3,616)** | **4,591** | **29** | **220** | **1,224** |

(*) ລາຍການນີ້ບໍ່ລວມເງິນແຮ

## 31. ການບໍລິຫານທຶນ

ສາຂາໄດ້ຮັກສາທຶນຕໍ່າສຸດຕາມລະບຽບການຂອງທຶນ ໂດຍອີງຕາມລະບຽບການເລກທີ 536/ກທຄສ/ທຫລ ລົງວັນທີ 14 ຕຸລາ 2009 ວ່າດ້ວຍຄວາມພຽງພໍຂອງທຶນ ແລະ ລາຍລະອຽດການແນະນຳອື່ນໆ. ຈຸດປະສົງຕົ້ນຕໍຂອງການບໍລິຫານທຶນຂອງສາຂາແມ່ນເພື່ອຮັບປະກັນວ່າ ສາຂາໄດ້ປະຕິບັດຕາມຂໍ້ກຳນົດທາງດ້ານເງິນທຶນຂອງ ທຫລ. ສາຂາຮັບຮູ້ເຖິງຄວາມຈຳເປັນໃນການບໍລິຫານຊັບສິນ ແລະ ໜີ້ສິນຢ່າງມີປະສິດທະພາບ ເພື່ອເຮັດໃຫ້ເກີດຄວາມສົມດຸນກັນລະຫວ່າງກຳໄລ ແລະ ຄວາມພຽງພໍຂອງທຶນ.

ອີງຕາມລະບຽບການເລກທີ 536/ກທຄສ/ທຫລ, ທຶນຕາມລະບຽບການຂອງສາຂາວິເຄາະເປັນສອງຂັ້ນຄື:

- ທຶນຊັ້ນ 1, ປະກອບດ້ວຍ ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອຂະຫຍາຍທຸລະກິດ, ທຶນອື່ນໆ ແລະ ກຳໄລສະສົມ;
- ທຶນຊັ້ນ 2, ປະກອບດ້ວຍໜີ້ສິນສຳຮອງ, ເງິນແຮທົ່ວໄປ ແລະ ອົງປະກອບຂອງຄັງສະສົມມູນຄ່າຍຸດຕິທຳທີ່ກ່ຽວຂ້ອງກັບກຳໄລ/ຂາດທຶນທີ່ບໍ່ເປັນຈິງ ເຊິ່ງກ່ຽວຂ້ອງກັບເຄື່ອງມືທາງດ້ານທຶນທີ່ໄດ້ຈັດປະເພດມີໄວ້ເພື່ອຂາຍ.

ຂອບເຂດຕ່າງໆແມ່ນຖືກນຳໃຊ້ເພື່ອເປັນອົງປະກອບຂອງທຶນອີງໃສ່: ທຶນຊັ້ນ 2 ບໍ່ສາມາດຫຼາຍກວ່າທຶນຊັ້ນ 1 ໄດ້ ແລະ ໜີ້ສິນສຳຮອງ ອາດຈະບໍ່ຮອດ 50% ຂອງທຶນ ຊັ້ນ 1.

ການວິເຄາະທຶນຂອງສາຂາແມ່ນອີງຕາມຂໍ້ມູນທາງການເງິນຈາກມາດຕະຖານສາກົນດ້ານການລາຍງານການເງິນດັ່ງຕໍ່ໄປນີ້:

| *ລາຍການ* | *31 ທັນວາ 2016 ພາຍໃຕ້ IFRS ລ້ານກີບ* | *31 ທັນວາ 2015 ພາຍໃຕ້ IFRS ລ້ານກີບ* |
|---|---:|---:|
| ທຶນຊັ້ນ 1 | 395,259 | 389,682 |
| ທຶນຊັ້ນ 2 | - | - |
| **ທຶນທັງໝົດ** | **395,259** | **389,682** |
| ຫັກຈາກທຶນ (ລົງທຶນໃນສິນເຊື່ອ ແລະ ສະຖາບັນການເງິນອື່ນໆ) | - | - |
| **ທຶນສຳລັບການຄິດໄລ່ CAR (A)** | **395,259** | **389,682** |
| ນ້ຳໜັກຄວາມສ່ຽງຂອງລາຍການໃນໃບລາຍງານຖານະການເງິນ | 172,150 | 89,141 |
| ນ້ຳໜັກຄວາມສ່ຽງຂອງລາຍການນອກໃບລາຍງານຖານະການເງິນ | - | - |
| **ລວມນ້ຳໜັກຄວາມສ່ຽງຂອງຊັບສິນ (B)** | **172,150** | **89,141** |
| **ອັດຕາຄວາມພຽງພໍຂອງທຶນ (A/B)** | **230%** | **437%** |

## 32. ມູນຄ່າຍຸຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ

ມູນຄ່າຍຸຕິທຳໝາຍເຖິງມູນຄ່າຊັບສິນທີ່ສາມາດແລກປ່ຽນເປັນເງິນ ຫຼື ການຊຳລະໜີ້ສິນບົນພື້ນຖານລາຍການເຄື່ອນໄຫວໃນເງື່ອນໄຂແກ່ງແຍ້ງປົກກະຕິ. ເນື່ອງຈາກວ່າບໍ່ມີລາຄາສົມທຽບຂອງຕະຫຼາດ, ຊັບສິນ ແລະ ໜີ້ສິນຂອງສາຂາຈຶ່ງບໍ່ສາມາດປະເມີນລາຄາຕາມຕະຫຼາດໄດ້, ດັ່ງນັ້ນ, ມູນຄ່າຍຸຕິທຳຈຶ່ງຖືກປະເມີນແບບສົມມຸດຖານອີງຕາມລັກສະນະຂອງຊັບສິນ ແລະ ໜີ້ສິນ. ໃນຄຳເຫັນຂອງຄະນະບໍລິຫານຂອງສາຂາ, ມູນຄ່າຍັງເຫຼືອໃນບັນຊີຊັບສິນ ແລະ ໜີ້ ສິນການເງິນທີ່ລວມເຂົ້າໄວ້ໃນໃບລາຍງານຖານະການເງິນແມ່ນມີການປະເມີນທີ່ສົມເຫດສົມຜົນຂອງລາຄາຍຸດຕິທຳ. ໃນການປະເມີນນີ້, ຄະນະບໍລິຫານສົມມຸດຕິຖານວ່າເງິນກູ້ ແລະ ເງິນລ່ວງໜ້າສ່ວນໃຫ່ຍແມ່ນຖືຄອງຮອດມື້ຄົບກຳນົດເວລາຊຳລະເງິນເຊິ່ງການຕີມູນຄ່າຍຸດຕິທຳແມ່ນເທົ່າກັບມູນຄ່າທີ່ລົງບັນຊີຂອງເງິນກູ້ທີ່ຖືກດັດແກ້ ແລະ ເງິນອຸດໜູນສຳລັບຄ່າເສື່ອມໜີ້ເສຍ.

## 33. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວນະມື້ລາຍງານ

| | *31 ທັນວາ 2016*<br>*ກີບ* | *31 ທັນວາ 2015*<br>*ກີບ* |
|---|---:|---:|
| ໂດລາສະຫະລັດ ("USD") | 8,184 | 8,148 |
| ບາດໄທ ("THB") | 229 | 225.96 |
| ຢວນຈີນ ("CNY") | 1,174 | 1,236 |

## 34. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ນະມື້ເຮັດບົດລາຍງານ ບໍ່ມີເຫດການ ຫຼື ສະຖານະການໃດເກີດຂຶ້ນ ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງສາຂາ.

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການໜ່ວຍງານການບໍລິຫານການເງິນ
ແລະ ການດຳເນີນງານ

ກວດຄືນໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2017